ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

29-31 ທັນວາ 2022
ປີທີ 11
ສະບັບທີ 903

# ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ອັດລົງດ້ວຍຜົນສຳເລັດອັນຈົບງາມ






(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ ແລະ ໄດ້ອັດລົງຢ່າງເປັນທາງການ ໃນຕອນບ່າຍຂອງວັນທີ 30 ທັນວາ 2022 ພາຍໃຕ້ການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ; ມີການນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ (ສສຊ), ອະດີດການນຳພັກ-ລັດ, ພະນັກງານອາວຸໂສບຳນານ, ອະດີດ ສສຊ, ຕາງໜ້າຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆ ແລະ ແຂກຖືກເຊີນ.

ຕະຫລອດ 20 ວັນຂອງການດຳເນີນກອງປະຊຸມ, ຄະນະປະທານໄດ້ຜັດປ່ຽນກັນເປັນປະທານກອງປະຊຸມ, ຮັບຟັງການລາຍງານ, ຄຳຊີ້ແຈງຈາກພາກສ່ວນຕ່າງໆ; ພ້ອມດຽວກັນນັ້ນ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທົ່ວປະເທດ ໄດ້ສຸມໃສ່ຄົ້ນຄວ້າພິຈາລະນາ ແລະ ເຫັນດີຮັບຮອງບາງບັນຫາສຳຄັນຕ່າງໆຂອງຊາດ.

ໃນລະຫວ່າງວັນທີ 26-29 ທັນວາ 2022 ບັນດາທ່ານ ສສຊ ໄດ້ຮັບຟັງ ແລະ ປະກອບຄຳເຫັນໃສ່ບົດລາຍງານຂອງສານປະຊາຊົນສູງສຸດ, ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ແລະ ການຈັດຕັ້ງປະຕິບັດວຽກງານຂອງສະພາແຫ່ງຊາດ; ພ້ອມນັ້ນ, ກໍໄດ້ຮັບຟັງການລາຍງານຄືນການປັບປຸງຮ່າງກົດໝາຍຕາມການປະກອບຄຳເຫັນຂອງບັນດາທ່ານ ສສຊ ແລະ ພິຈາລະນາຮັບຮອງເອົາບັນດາຮ່າງກົດໝາຍ ຈຳນວນ 12 ສະບັບ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ; ພ້ອມນັ້ນ, ກອງປະຊຸມຍັງໄດ້ພິຈາລະນາ ແລະ ຮັບຮອງເອົາຮ່າງມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 7 ສະບັບ ຄື: ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ແຜນການ ປະຈຳ

ອ່ານຕໍ່ໜ້າ 8

## ບົດສູນທອນພົດກ່າວປິດກອງປະຊຸມສະໄໝສາມັນເທື່ອທີ 4

**ຮຽນ:** - ພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ!

- ບັນດາທ່ານ ຜູ້ນຳຂັ້ນສູງ, ອາດີດຜູ້ນຳຂັ້ນສູງ ຂອງພັກ-ລັດ ທີ່ນັບຖື.

- ບັນດາທ່ານສະມາຊິກສະພາແຫ່ງຊາດ, ແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງທັງຫລາຍ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນມາແຕ່ວັນທີ 5 ຫາວັນທີ 30 ທັນວາ 2022 ເຊິ່ງລວມເປັນເວລາ 20 ວັນ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ກຳລັງສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະ

ອ່ານຕໍ່ໜ້າ 2

## ຖະແຫລງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4



(ສພຊ) ໃນວັນທີ 30 ທັນວາ 2022 ທີ່ສະພາແຫ່ງຊາດ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການຄະນະປະຈຳ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫລງຂ່າວຕໍ່ສື່ມວນຊົນທຸກຂະແໜງການກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ:

ຂ້າພະເຈົ້າຕາງໜ້າຄະນະປະ

ອ່ານຕໍ່ໜ້າ 8

## ສະບາຍດີປີໃໝ່ 2023

(ຈາກໃຈ ບກ ໜັງສືພິມ ຜູ້ແທນປະຊາຊົນ)

ປີເກົ່າກາຍຜ່ານພົ້ນ ປີໃໝ່ມາແທນ
ຂໍໃຫ້ປວງຊົນລາວ ທົ່ວທານີແດວ້ນ
ມີຄວາມສຸກສົມແມ້ງ ມະໂນໃນສິດຊື່ນ
ການນຳພັກ-ລັດພ້ອມ ຢືນໝັ້ນຊົ່ວນິລັນ

ກອນນີ້ຝັນກອດກ້ຽວ ສຸກໂຊກພອນໄຊ
ນຳເອົາຄວາມສົດໃສ ສິ່ງດີມາຕ້ອນ
ໄຫລຫລັ່ງລົນລົງໂຮມເຂົ້າ ປວງຊົນທຸກທິນແຫ່ງ
ມີຄວາມສຸກລາບລົ້ນ ຈະເລີນກ້າວຮຸ່ງເຮືອງ ທ່ານເອີຍ!

## ການອອກໃບຕາດິນ



ທ່ານ ນາງ ບຸນຄຳ ວໍລະຈິດ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ.

ໃນນີ້ທາງເບື້ອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະສົມທົບຄືນກັບແຂວງ ເພື່ອກວດກາຄືນ ແລະ ຊຸກຍູ້ໂຄງການນັ້ນໂຈະການດຳເນີນກ່ອນ ປະຕິບັດຕາມລະບຽບການໃນການສຶກສາຜົນກະທົບທີ່ຈະເກີດຂຶ້ນ ແລະ ວາງແຜນມາດຕະການຫລຸດຜ່ອນ ເພື່ອສືບຕໍ່ການປະຕິບັດໂຄງການ ຫັ້ນແມ່ນອັນໜຶ່ງທີ່ສະເໜີລາຍງານຕໍ່ຄຳຊັກຖາມຂອງຜູ້ແທນ.

ຍັງມີຄຳຊັກຖາມຂອງຜູ້ແທນຈຳນວນໜຶ່ງທີ່ສະເໜີແຕ່ວານນີ້ຮອດມື້ນີ້ ອີງໃສ່ເວລາກໍບໍ່ຮູ້ວ່າທັງຊິຂໍອະນຸຍາດຊີ້ແຈງຢູ່ນີ້ເລີຍເນາະ ຂໍອະນຸຍາດຊີ້ແຈງ.

**ໃນບັນຫາທີໜຶ່ງ** ກ່ຽວກັບການຮັບຮູ້ສິດປະຊາຊົນທີ່ອາໄສຢູ່ 3 ປະເພດປ່າ ເຫັນວ່າມີຄວາມຄອງຄອຍທີ່ຈະໄດ້ຮັບການແກ້ໄຂໃນການຢັ້ງຢືນສິດນຳໃຊ້. ລາຍງານຕໍ່ກອງປະຊຸມຊາບວ່າໃນບັນຫາດັ່ງກ່າວນີ້ເບື້ອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ໃນການເຮັດທົດລອງໂຄງການຢູ່ແຂວງຄຳມ່ວນ, ແຂວງຫົວພັນ ແລະ ແຂວງໄຊຍະບູລີ ໃນການສຳຫລວດພື້ນທີ່ດິນປ່າໄມ້ຢູ່ໃນ 3 ປະເພດປ່າດັ່ງກ່າວນີ້. ເຊິ່ງວ່າໃນການເຮັດທົດລອງນີ້ພວກເຮົາເຫັນວ່າ ມີຫລາຍບ້ານທີ່ນອນຢູ່ໃນ 3 ປະເພດປ່າ ຖືວ່າທາງບ້ານທາງໂຄງການແມ່ນນອນຢູ່ໃນ 3 ປະເພດປ່າ; ສະນັ້ນ, ໃນການແກ້ໄຂນີ້

ອ່ານຕໍ່ໜ້າ 7

## ບັນຫາການລົງທຶນຂອງລັດສຳລັບປີ 2023



ບົດຄຳເຫັນຂອງທ່ານ ລີເບີ ລີບົ່ວປາວ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ຂ້າພະເຈົ້າ ຂໍສະແດງຄວາມເປັນເອກະພາບ ແລະ ບັນດາຄຳເຫັນຂອງບັນດາສະມາຊິກສະພາແຫ່ງຊາດ ແລະ ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ໂດຍອີງໃສ່ຄຳ

ອ່ານຕໍ່ໜ້າ 3

## ມີຂໍ້ຕົກລົງໃຫ້ເກັບລາຍຮັບ

ຄຳເຫັນຂອງທ່ານ ປອ. ເກດແກ້ວ ສີຫາດລາດ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ ປະກອບຄຳເຫັນຕໍ່ບົດລາຍງານລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ

ຂ້າພະເຈົ້າຂໍເຂົ້າປະເດັ່ນ

ອ່ານຕໍ່ໜ້າ 7



## ບັນຫາຄູອາສາ, ແພດອາສາ



ຄຳເຫັນຂອງທ່ານ ສັນຍາ ປຣະເສີດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ປີ 2022 ແລະ ທິດທາງແຜນການປີ 2023 ຂ້າພະເຈົ້າ ຂໍປະກອບຄວາມເຫັນກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ປີ 2022 ໂດຍລວມແລ້ວຂ້າພະເຈົ້າເຫັນດີເປັນເອກະພາບນຳຫລາຍທ່ານທີ່ໄດ້ສະເໜີປະກອບຄຳເຫັນໄປແລ້ວນັ້ນ ແລະ ຂໍສະແດງຄວາມຊົມເຊີຍມາຍັງທາງລັດຖະບານທີ່ວ່າມີຄວາມພະຍາຍາມໃນການຄຸ້ມຄອງໃຫ້ເສດຖະກິດແມ່ນສືບຕໍ່ມີການຂະຫຍາຍຕົວ ເຖິງແມ່ນວ່າຈະມີຄວາມຫຍຸ້ງຍາກຫລາຍປະການ, ແຕ່ວ່າປະຈຸບັນນີ້ ຂ້າພະເຈົ້າຈະຂໍປະກອບຄຳເຫັນຢູ່ໃນບາງຈຸດ ຂໍໃຫ້ລັດຖະບານນີ້ເອົາໃຈໃສ່ໂດຍສະເພາະ.

ບັນຫາທີໜຶ່ງ ບັນຫາເລື່ອງຄູ, ບັນຫາເລື່ອງແພດ. ຫລາຍທ່ານກໍໄດ້ປະກອບຄວາມເຫັນໄປແລ້ວນັ້ນກ່ຽວກັບເລື່ອງການຍົກຄຸນນະພາບ, ເລື່ອງການສິດສອນ ຂ້າພະເຈົ້າເຫັນວ່າອັນນັ້ນກໍມີບັນຫາທີ່ສຳຄັນ ແຕ່ອັນສຳຄັນກໍແມ່ນວ່າພວກເຮົາເຫັນວ່າໃນປະຈຸບັນນີ້ ຄູອາສາ, ແພດອາສາ ຍັງມີຫລາຍຢູ່ ແລະ ພວກເຮົາໃນທຸກມື້ນີ້ພວກເຮົາຍັງມີຄວາມສ່ຽງທີ່ຈະເສຍບັນດາທ່ານຄູເຫລົ່ານັ້ນເສຍໄປ, ພວກເຮົາຕ້ອງເຂົ້າໃຈວ່າ ຖ້າວ່າຄູເກັ່ງ ນັກຮຽນຈຶ່ງຄ່ອຍເກັ່ງວ່າຊັ້ນເນາະ, ແພດເກັ່ງຈຶ່ງເຮັດໃຫ້ສາມາດປິ່ນປົວ ຫລືວ່າປິ່ງມະຕິນັ້ນໄດ້ຢ່າງຖືກຕ້ອງ. ສະນັ້ນ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 8

**ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

## ບົດສູນທອນ...

ນະ ຄັ້ງທີ 5 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ດ້ວຍຄວາມຮັບຜິດຊອບສູງ ເຂົ້າໃນແຕ່ລະຂົງເຂດວຽກງານໃຫ້ບັນລຸຜົນສຳເລັດ; ການສະເຫລີມສະຫລອງວັນສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 47 ປີ, ວັນຄ້າຍວັນເກີດຂອງປະທານໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນບັນດາເຜົ່າ ຄົບຮອບ 102 ປີ ແລະການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ພວມດຳເນີນຢ່າງເປັນຂະບວນຟົດຟື້ນ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງນັບມື້ດີຂຶ້ນ ເຊິ່ງສ່ອງແສງໃຫ້ເຫັນເຖິງຄວາມຕັດສິນໃຈ ແລະຄວາມຮັບຜິດຊອບສູງ ຂອງບັນດາອົງການຈັດຕັ້ງພັກ-ລັດ ໃນການຮ່ວມກັນແກ້ໄຂບັນຫາທີ່ຫຍຸ້ງຍາກຂອງປະເທດ. ມາຮອດມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ບັນລຸຜົນສຳເລັດ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022 ແລະ ແຜນການປະຈຳປີ 2023; ການຈັດຕັ້ງປະຕິບັດແຜນເງິນຕາ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023. ກອງປະຊຸມໄດ້ຕີລາຄາເຖິງວ່າປະເທດເຮົາຖືກຜົນກະທົບຈາກສະພາບການຂອງພາກພື້ນ, ສາກົນ ແລະ ສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ສັງຄົມຢູ່ພາຍໃນປະເທດເຮົາທີ່ສະສົມມາຫລາຍປີ ແຕ່ດ້ວຍຄວາມພະຍາຍາມສູງຂອງລັດຖະບານ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ຄວາມເປັນເອກະພາບຮ່ວມກັບສະພາແຫ່ງຊາດ ຕໍ່ວຽກງານສຳຄັນຕ່າງໆ ແລະ ຄວາມບຸກບືນຂອງບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ກໍຄືປະຊາຊົນບັນດາເຜົ່າ ເຮັດໃຫ້ການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມຂອງພວກເຮົາມີຫລາຍດ້ານໄດ້ຮັບຜົນສຳເລັດ, ມີບາງດ້ານໄດ້ເກີນຄາດໝາຍ, ຄາດຄະເນອັດຕາການເຕີບໂຕທາງດ້ານເສດຖະກິດໝົດປີ 2022 ສາມາດບັນລຸໄດ້ 4,4%, ການເກັບລາຍຮັບງົບປະມານໄດ້ມີຄວາມເຂັ້ມງວດ, ການຄຸ້ມຄອງລາຍຈ່າຍໄປຕາມນະໂຍບາຍປະຢັດ ແລະ ອື່ນໆ ເຮັດໃຫ້ສາມາດຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ ແລະ ສາມາດປະຄັບປະຄອງເສດຖະກິດບໍ່ໃຫ້ຕົກເຂົ້າສູ່ວິກິດການທີ່ໜັກໜ່ວງ; ກອງປະຊຸມມອບໃຫ້ລັດຖະບານ ນຳເອົາຄວາມຄິດເຫັນຂອງກອງປະຊຸມໄປພິຈາລະນາ ເພື່ອສືບຕໍ່ປັບປຸງ, ແກ້ໄຂບັນດາບັນຫາທີ່ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ກັບສູ່ສະພາບປົກກະຕິໂດຍໄວ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເຊິ່ງເຫັນວ່າອົງຄະນະພັກແຕ່ລະຂັ້ນ ໄດ້ເອົາໃຈໃສ່ນຳພາບັນດາອົງການຈັດຕັ້ງລັດແຕ່ລະຂັ້ນ ກໍຄືປະຊາຊົນບັນດາເຜົ່າຈັດຕັ້ງປະຕິບັດວາລະແຫ່ງຊາດ ດ້ວຍການຜັນຂະຫຍາຍເປັນແຜນງານ, ໂຄງການລະອຽດ ແລະ ສູ້ຊົນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດເປັນກ້າວໆ, ການຜະລິດກະສິກຳເປັນສິນຄ້າເພື່ອຊົມໃຊ້ພາຍໃນ ແລະສົ່ງອອກ ໄດ້ມີບາດກ້າວຂະຫຍາຍຕົວ, ການແກ້ໄຂບັນຫາຢາເສບຕິດ ກໍໄດ້ຮັບຄວາມເອົາໃຈໃສ່ ແລະ ມີຜົນສຳເລັດຫລາຍດ້ານ. ພ້ອມກັນນັ້ນ, ກອງປະຊຸມສະເໜີໃຫ້ລັດຖະບານ ເອົາໃຈໃສ່ສືບຕໍ່ຂຸດຄົ້ນທ່າແຮງບົ່ມຊ້ອນທາງດ້ານເສດຖະກິດໃຫ້ໄດ້ຢ່າງຄົບຖ້ວນ, ເພີ່ມທະວີການຄຸ້ມຄອງໂຄງການເຮັດທົດລອງແຮ່ທາດໃຫ້ເຂັ້ມງວດ, ມີປະສິດທິຜົນ ແລະ ຮັບປະກັນຜົນປະໂຫຍດລວມຂອງລັດ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງລັດຖະບານ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ, ປັບປຸງກົນໄກການຄຸ້ມຄອງການສ້າງວິຊາຊີບ, ການພັດທະນາສີມືແຮງງານ, ການຈັດຫາວຽກເຮັດງານທຳເພື່ອສ້າງເງື່ອນໄຂໃຫ້ຊາວໜຸ່ມມີວຽກເຮັດງານທຳ, ມີວິຊາອາຊີບ, ເປັນເຈົ້າຂອງວິສາຫະກິດຂະໜາດນ້ອຍ, ຂະໜາດກາງ, ມີອາຊີບໝັ້ນຄົງ, ມີລາຍໄດ້ ແລະ ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023, ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021, ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2020 ເຊິ່ງກອງປະຊຸມໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ທີ່ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ ເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ມີປະສິດທິຜົນ, ການຈັດຕັ້ງປະຕິບັດວິໄນແຜນການ-ການເງິນ ມີຄວາມເຂັ້ມງວດຫລາຍຂຶ້ນ. ພ້ອມກັນນັ້ນ, ກອງປະຊຸມໄດ້ສະເໜີໃຫ້ສອງອົງການ ເອົາໃຈໃສ່ສົມທົບພາກສ່ວນກ່ຽວຂ້ອງແກ້ໄຂຜົນການກວດສອບໃຫ້ເປັນຮູບປະທຳຫລາຍຂຶ້ນກວ່າເກົ່າ ເພື່ອເກັບກູ້ວັດຖຸ, ເງິນຄຳທີ່ເປັນຊັບສິນ ລວມຂອງລັດກັບຄືນ, ຄົ້ນຄວ້າການ ກຳນົດຂອບເຂດສິດຂອງສອງອົງການ ເຂົ້າໃນກົດໝາຍໃຫ້ລະອຽດ, ຈະແຈ້ງຕື່ມ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ເຊິ່ງກອງປະຊຸມໄດ້ຕີລາຄາທັງສອງອົງການ ໄດ້ມີຄວາມພະຍາຍາມປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ໄດ້ຍົກສູງຄຸນນະພາບໃນການດຳເນີນຄະດີຕາມຂະບວນຍຸຕິທຳ ນັບມື້ມີຄຸນນະພາບສູງຂຶ້ນ, ເອົາໃຈໃສ່ການຜັນຂະຫຍາຍມະຕິ, ຄຳສັ່ງຂອງສູນກາງພັກ ເຂົ້າໃນການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍຂອງຕົນໃຫ້ເປັນລະບົບຄົບຊຸດ, ເປັນບ່ອນອີງໃນການແກ້ໄຂບັນຫາຕ່າງໆ, ເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນໃນການປະຕິບັດຄຳຕັດສິນຂອງສານ, ແກ້ໄຂບັນຫາຄວາມຫຍຸ້ງຍາກຂອງການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີບາດກ້າວຫັນປ່ຽນທີ່ດີຂຶ້ນ. ກອງປະຊຸມໄດ້ສະເໜີໃຫ້ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ມີມາດຕະການປັບປຸງ ແລະ ແກ້ໄຂບັນດາຈຸດອ່ອນ, ຂໍ້ຄົງຄ້າງ ເພື່ອເຮັດໃຫ້ບັນດາປາກົດການຫຍໍ້ທໍ້ໄດ້ຮັບການແກ້ໄຂຢ່າງຈິງຈັງ ແລະ ນັບມື້ຫລຸດໜ້ອຍຖອຍລົງ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາການສ້າງ ແລະປັບປຸງກົດໝາຍ ຈຳນວນ 12 ສະບັບ ໃນນີ້: ມີກົດໝາຍສ້າງໃໝ່ 3 ສະບັບ ຄື: ກົດໝາຍວ່າດ້ວຍໜັງສືຜ່ານແດນ; ກົດໝາຍວ່າດ້ວຍການທາງນ້ຳ; ກົດໝາຍວ່າດ້ວຍພິພິທະພັນ; ກົດໝາຍປັບປຸງ 9 ສະບັບ ຄື: ກົດໝາຍວ່າດ້ວຍທະນາຍຄວາມ; ກົດໝາຍວ່າດ້ວຍທະບຽນສານ; ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່; ກົດໝາຍວ່າດ້ວຍວິສາຫະກິດ; ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ; ກົດໝາຍວ່າດ້ວຍອົງການໄອຍະການທະຫານ; ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍການກວດກາລັດ ເຊິ່ງເນື້ອແທ້ກໍແມ່ນຄວາມພະຍາຍາມ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ໃຫ້ເປັນອັນລະອຽດ ທັງເປັນການປະກອບສ່ວນສຳຄັນເຂົ້າໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ທັງເປັນການປັບປຸງ ແລະ ເພີ່ມທະວີພາຫະນະ, ເຄື່ອງມືຄຸ້ມຄອງລັດ-ສັງຄົມດ້ວຍກົດໝາຍ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາດ, ຂອງລັດ, ລວມໝູ່, ນິຕິບຸກຄົນ ແລະ ປະຊາຊົນລາວບັນດາເຜົ່າ, ຮັບປະກັນໃຫ້ແກ່ສ້າງລັດປະຊາທິປະໄຕປະຊາຊົນຂອງພວກເຮົາ ໃຫ້ເປັນລັດ ຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ເທື່ອລະກ້າວ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງສະພາແຫ່ງຊາດ. ກອງປະຊຸມຕີລາຄາວ່າ, ໃນໜຶ່ງປີຜ່ານມາ ສະພາແຫ່ງຊາດໄດ້ມີຄວາມເປັນເຈົ້າການ, ຫ້າວຫັນໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ໄດ້ຮັບຜົນສຳເລັດຫລາຍດ້ານ ເຮັດໃຫ້ບົດ ບາດຂອງສະພາແຫ່ງຊາດໄດ້ຮັບການເຊີດຊູນັບມື້ສູງຂຶ້ນ, ໄດ້ຮັບຄວາມເຊື່ອໝັ້ນຈາກອົງການຈັດຕັ້ງລັດຂັ້ນຕ່າງໆ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ ນັບມື້ນັບກວ້າງຂວາງ. ກອງປະຊຸມສະເໜີໃຫ້ເອົາໃຈໃສ່ການສ້າງ ແລະ ປັບປຸງກົດໝາຍ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ໃນການຄຸ້ມຄອງລັດ-ສັງຄົມໃນແຕ່ລະໄລຍະ, ເອົາໃຈໃສ່ການທາບທາມຮ່າງກົດໝາຍ, ການປະເມີນການປະຕິບັດກົດໝາຍ ເພື່ອຮັບປະກັນໃຫ້ກົດໝາຍມີຄວາມສອດຄ່ອງກັບສະພາບການພັດທະນາທາງດ້ານເສດຖະກິດ-ສັງຄົມໃນແຕ່ລະໄລຍະ ແລະ ມີຄວາມສັກສິດຫລາຍຂຶ້ນ; ເພີ່ມທະວີການປະຕິບັດພາລະບົດບາດຕິດຕາມກວດກາຢ່າງມີຈຸດສຸມ, ຮ່ວມກັບລັດຖະບານແກ້ໄຂບັນຫາຕ່າງໆຢ່າງທັນການ ລວມທັງການນຳເອົາຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ ກໍຄືນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລັດ ໄປເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງທົ່ວປະເທດຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງ ຂວາງ;

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025. ກອງປະຊຸມຕີລາຄາວ່າການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍດັ່ງກ່າວ ໄດ້ມີຄວາມເປັນເອກະພາບຮ່ວມກັບລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ, ມີຄວາມສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ໃນການຄຸ້ມຄອງລັດ-ສັງຄົມໃນຕໍ່ໜ້າ. ວຽກງານທີ່ຈະຕ້ອງໄດ້ເອົາໃຈໃສ່ແມ່ນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍໃນແຕ່ລະປີ ໃຫ້ບັນລຸຕາມແຜນການທີ່ວາງໄວ້, ເອົາໃຈໃສ່ຈັດຕັ້ງການທາບທາມຮ່າງກົດໝາຍຢ່າງກວ້າງຂວາງ, ການປະເມີນການປະຕິບັດກົດໝາຍ ແລະ ອື່ນໆ. ກອງປະຊຸມມອບໃຫ້ຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ນຳເອົາຄຳເຫັນຂອງກອງປະຊຸມໄປປັບປຸງ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດສອດຄ່ອງກັບສະພາບຕົວຈິງ.

ກອງປະຊຸມໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ແລະ 2 ວາລະແຫ່ງຊາດ ເຊິ່ງສະມາຊິກສະພາແຫ່ງຊາດ ກໍຄືປະຊາຊົນບັນດາເຜົ່າ ໃຫ້ຄວາມສົນໃຈຫລາຍຈາກທ່ານນາຍົກລັດຖະມົນຕີ, ທ່ານຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳເສດຖະກິດ, ທ່ານຮອງນາຍົກລັດຖະມົນຕີ-ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ລັດຖະມົນຕີກະຊວງພາຍໃນ, ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ລັດຖະມົນຕີກະຊວງເຕັກໂນໂລຊີແລະການສື່ສານ, ຜູ້ວ່າການທະນາຄານແຫ່ງ ສປປລາວ. ນອກຈາກນັ້ນ, ຍັງໄດ້ຮັບການໃຫ້ຄວາມກະຈ່າງແຈ້ງຈາກປະທານອົງການກວດສອບແຫ່ງລັດ, ປະທານອົງການກວດກາແຫ່ງລັດ, ທ່ານປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ລັດຖະມົນຕີກະຊວງຍຸຕິທຳ ຕື່ມອີກ. ກອງປະຊຸມມີຄວາມເຊື່ອໝັ້ນວ່າແຕ່ລະພາກສ່ວນຈະນຳເອົາການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ໄປພິຈາລະນາ ເພື່ອເຮັດໃຫ້ບັນຫາຕ່າງໆທີ່ເກີດຂຶ້ນໃນສັງຄົມ ໄດ້ຮັບການແກ້ໄຂ, ພ້ອມທັງສູ້ຊົນຈຳກັດ ແລະ ປັບປຸງແກ້ໄຂບັນດາອຸປະສັກ, ສິ່ງກີດຂວາງ ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບໃຫ້ຕົກໄປຕິດພັນກັບການຍູ້ແຮງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ເພື່ອສ້າງໃຫ້ມີການຫັນປ່ຽນທີ່ດີຂຶ້ນຢ່າງແຂງແຮງ, ຈະແຈ້ງ ແລະ ສືບຕໍ່ຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ໂດຍສະເພາະການປະຕິບັດ 2 ວາລະແຫ່ງຊາດ ໃຫ້ມີໝາກຜົນຕົວຈິງຫລາຍຂຶ້ນ ແນໃສ່ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ນັບມື້ນັບດີຂຶ້ນ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຄັ້ງນີ້ ໄດ້ພິຈາລະນາ ແລະ ຮັບຮອງການສະເໜີຂອງປະທານປະເທດ ກ່ຽວກັບການພິຈາລະນາໃບຄຳຮ້ອງຂໍພັກການ-ຮັບອຸດໜູນບຳນານຂອງທ່ານ ພັນຄຳ ວິພາວັນ ກຳມະການກົມການ ເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປລາວ. ກອງປະຊຸມໄດ້ເລືອກຕັ້ງນາຍົກລັດຖະມົນຕີ ແຫ່ງ ສປປລາວ ຕາມການສະເໜີຂອງປະທານປະເທດ ເຊິ່ງບັນດາສະມາຊິກສະພາແຫ່ງຊາດ ໄດ້ໃຊ້ສິດປະຊາທິປະໄຕຂອງຕົນ ລົງຄະແນນສຽງເຫັນດີຫລາຍກວ່າເຄິ່ງໜຶ່ງຂອງສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ ໂດຍຮັບຮອງເອົາທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ເປັນນາຍົກລັດຖະມົນຕີແຫ່ງ ສປປລາວ ຄົນໃໝ່.

ບັນດາທ່ານຜູ້ນຳພັກ-ລັດ ທີ່ນັບຖື!

ບັນດາຜູ້ແທນກອງປະຊຸມທີ່ຮັກແພງ!

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ຄວາມຕັດສິນໃຈສູງຂອງລັດຖະບານ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາປະເທດຊາດ, ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເທື່ອລະກ້າວ, ນຳເອົາປະເທດຊາດ ກ້າວຂຶ້ນຢ່າງໜັກແໜ້ນ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ຍ້ອນຄວາມຮັບຜິດຊອບສູງຂອງລັດຖະບານ, ກະຊວງ, ບັນດາອົງການທີ່ກ່ຽວຂ້ອງ ແລະ ຂະແໜງການກ່ຽວຂ້ອງ ທີ່ໃຫ້ການຮ່ວມມື ແລະ ສະໜັບສະໜູນ.

ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ທີ່ຍາມໃດກໍໄດ້ໃຫ້ການຊີ້ນຳຢ່າງໃກ້ຊິດຕໍ່ສະພາແຫ່ງຊາດໂດຍຕະຫລອດມາ, ຂໍສະແດງຄວາມຂອບໃຈ ເປັນຢ່າງສູງມາຍັງບັນດາທ່ານການນຳພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະຂອບໃຈມາຍັງ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ທີ່ໄດ້ຕິດຕາມກອງປະຊຸມຂອງພວກເຮົາໃນຄັ້ງນີ້ ຢ່າງຈົດຈໍ່ ແລະສົ່ງຄຳຄິດເຫັນຜ່ານໂທລະສັບສາຍດ່ວນມາຍັງກອງປະຊຸມຢ່າງຫລວງຫລາຍ.

ຂໍສະແດງຄວາມຂອບໃຈຕໍ່ທຸກພາກສ່ວນກ່ຽວຂ້ອງທີ່ໄດ້ປະກອບສ່ວນເຂົ້າໃນຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນຕົ້ນກອງເລຂາກອງປະຊຸມ ທີ່ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອນີ້ຢ່າງຫ້າວຫັນ ແລະ ມີຄວາມຮັບຜິດຊອບສູງ; ຂໍສະແດງຄວາມຂອບໃຈຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທີ່ເອົາໃຈໃສ່ວຽກງານການປ້ອງກັນຄວາມສະຫງົບ, ປອດໄພໃຫ້ກອງປະຊຸມຄັ້ງນີ້ ແລະຂອບໃຈຕໍ່ບັນດາສື່ມວນຊົນທີ່ໄດ້ນຳສະເໜີຂ່າວສານ ໂດຍການຖ່າຍທອດສົດຂ່າວຜ່ານວິທະຍຸ, ໂທລະພາບ ແລະສື່ເອເລັກໂຕນິກ ເຊິ່ງໄດ້ອຳນວຍຄວາມສະດວກໃຫ້ສັງຄົມໄດ້ຕິດຕາມການດຳເນີນກອງປະຊຸມໄດ້ທັນສະພາບການແທດຕົວຈິງ ແລະ ຕໍ່ເນື່ອງ.

ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຄັ້ງນີ້, ກອງປະຊຸມຮຽກຮ້ອງມາຍັງຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ລັດຖະບານ, ອົງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍມະຕິກອງປະຊຸມຄັ້ງນີ້ ເຂົ້າໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ສຸດທ້າຍນີ້, ເນື່ອງໃນໂອກາດປີໃໝ່ສົມກົມທີ່ຈະມາເຖິງນີ້, ຂ້າພະເຈົ້າຕາງໜ້າໃຫ້ກອງປະຊຸມສະພາແຫ່ງຊາດ ຂໍອວຍພອນໄຊອັນປະເສີດ ມາຍັງພະນະທ່ານເລຂາທິການໃຫຍ່, ປະທານປະເທດ ຈົ່ງມີພາລານາໄມສົມບູນມີຄວາມຜາສຸກໃນຊີວິດຄອບຄົວ, ມີຜົນສຳເລັດໃໝ່ໃຫຍ່ຫລວງກວ່າເກົ່າໃນການຊີ້ນຳ-ນຳພາປະເທດຊາດ ກ້າວຂຶ້ນຢ່າງໜັກແໜ້ນ.

ຂໍອວຍພອນໃຫ້ບັນດາທ່ານການນຳຂັ້ນສູງພັກ-ລັດ, ອະດີດການນຳພັກ-ລັດ, ພະນັກງານ, ທະຫານຕຳຫລວດ ແລະ ປະຊາຊົນລາວ ບັນດາເຜົ່າໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກໃນຄອບຄົວ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດຂອງຕົນ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍປະກາດປິດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

# ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງ 2 ອົງການ

ອ່ານຕໍ່ຈາກສະບັບກ່ອນ...

2) ຍັງບໍ່ທັນໄດ້ກວດກາເປົ້າໝາຍຕາມມະຕິຂອງສະພາແຫ່ງຊາດ ເລກທີ 24/ສພຊ, ລົງວັນທີ 16 ພະຈິກ 2021 ຈຳນວນໜຶ່ງ ເປັນຕົ້ນກວດກາການຍົກເວັ້ນພາສີ-ອາກອນຈາການນຳເຂົ້ານ້ຳ ມັນເຊື້ອໄຟ ແລະ ກວດກາການປະຕິຮູບທະນາຄານທຸລະກິດລັດ ແລະ ວິສາຫະກິດລັດ ຕາມພາລະບົດບາດຂອງອົງການກວດກາ;

3) ການປະສານງານ, ສະໜອງຂໍ້ມູນຂ່າວສານ ກ່ຽວກັບການແກ້ໄຂຜົນການກວດກາກັບພາກສ່ວນທີ່ກ່ຽວຂ້ອງ ເຫັນວ່າຍັງບໍ່ທັນເປັນລະບົບ ແລະ ທັນການເທົ່າທີ່ຄວນ;

4) ການສ້າງຄວາມເຂັ້ມແຂງໃຫ້ພະນັກງານ ຂອງອົງການກວດກາແຫ່ງລັດ ທັງທາງດ້ານຈຳນວນ ແລະ ຄຸນນະພາບໃຫ້ມີຄວາມຮູ້ດ້ານວິຊາສະເພາະທີ່ເປັນມືອາຊີບຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານກວດກາໃນໄລຍະໃໝ່ເທົ່າທີ່ຄວນ;

2. ທິດທາງແຜນການ ປະຈຳປີ 2023

ຄະນະປະຈຳສະພາແຫ່ງຊາດ ເຫັນດີ ຕໍ່ທິດທາງແຜນການເຄື່ອນໄຫວວຽກງານປີ 2023 ທີ່ອົງ ການກວດກາແຫ່ງລັດໄດ້ສະເໜີ ມີ 3 ທິດທາງລວມ, 4 ຄາດໝາຍສູ້ຊົນ, 9 ວຽກຈຸດສຸມ ແລະ 7 ມາດຕະການຈັດຕັ້ງປະຕິບັດ; ຄະນະປະຈຳສະພາແຫ່ງຊາດ ມີບາງຄຳເຫັນ ແລະ ຂໍ້ສະເໜີ ດັ່ງນີ້:

1. ຕໍ່ກັບຄາດໝາຍສູ້ຊົນ

1) ສະເໜີໃຫ້ຄົ້ນຄວ້າບັນດາຄາດໝາຍທີ່ໄດ້ກຳນົດໃນມະຕິສະພາແຫ່ງຊາດ ສຳລັບ ປີ 2022 ທີ່ບໍ່ທັນໄດ້ຈັດຕັ້ງປະຕິບັດກຳນົດເຂົ້າແຜນປີ 2023 ໂດຍສອດຄ່ອງຕາມພາລະບົດບາດ ຂອງອົງການກວດກາແຫ່ງລັດ;

2) ສະເໜີໃຫ້ຄົ້ນຄວ້າບັນດາເປົ້າໝາຍທີ່ອົງການກວດສອບແຫ່ງລັດສົ່ງໃຫ້ຈາກຜົນການກວດ ສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ຜົນກວດສອບ ເອກະສານລາຍງານເອກະສານການເງິນຂອງລັດວິສາຫະກິດ, ໂຄງການຊ່ວຍເຫລືອ (ODA) ແລະ ທະນາຄານລັດ ປະຈຳປີ 2021 ເຂົ້າເປັນຄາດໝາຍສູ້ຊົນ ປີ 2023 ໃຫ້ຈະແຈ້ງ ແລະ ຊັດເຈນ;

3) ສະເໜີໃຫ້ຄົ້ນຄວ້າເປົ້າໝາຍກວດກາທີ່ຕິດພັນກັບການປະຕິບັດວາລະແຫ່ງຊາດເຂົ້າໃນແຜນປີ 2023;

ຫລັງຈາກຄົ້ນຄວ້າແລ້ວ ໃຫ້ສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາເຂົ້າໃນມະຕິສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງໃນກອງປະຊຸມຄັ້ງນີ້.

2. ຕໍ່ກັບມາດຕະການຈັດຕັ້ງປະຕິບັດ

ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ເອົາໃຈໃສ່ຕື່ມ ດັ່ງນີ້:

1) ສູ້ຊົນແກ້ໄຂຂໍ້ຄົງຄ້າງໃນປີຜ່ານມາ ແລະ ເສີມຂະຫຍາຍ ບົດຮຽນທີ່ຖອດຖອນໄດ້ ເພື່ອແກ້ໄຂບັນຫາທີ່ເປັນລັກສະນະຊ້ຳເຮື້ອໃຫ້ຄ່ອຍຫລຸດໜ້ອຍຖອຍລົງ;

2) ເອົາໃຈໃສ່ສົມທົບກັບກຳມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ ແລະ ລັດຖະບານຮຽບຮຽງ ແລະ ປັບປຸງ ກົດໝາຍວ່າດ້ວຍການກວດກາລັດ ສະບັບປັບປຸງທີ່ໄດ້ສະເໜີຜ່ານກອງປະຊຸມ ສະໄໝສາມັນເທື່ອທີ 4 ໃຫ້ສຳເລັດໂດຍໄວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີ ຄວາມສອດຄ່ອງ ກັບສະພາບຕົວຈິງ ແລະ ມີຜົນສັກສິດ;

3) ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ຂອງອົງການກວດກາແຫ່ງລັດ ໃຫ້ມີຄວາມຮູ້ດ້ານວິຊາສະເພາະທີ່ ເປັນມືອາຊີບ, ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳທີ່ໜັກແໜ້ນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານກວດກາໃນໄລຍະໃໝ່ໃຫ້ມີຜົນສຳເລັດ ແລະ ມີຄຸນນະພາບສູງຂຶ້ນ;

4) ເອົາໃຈໃສ່ປັບປຸງກົນໄກການປະສານງານ ລະຫວ່າງ ອົງການກວດກາແຫ່ງລັດ ກັບສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມກົມກຽວ, ຄ່ອງຕົວ, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ;

5) ເອົາໃຈໃສ່ຕິດຕາມກວດກາການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ນັກກວດກາ ຢ່າງໃກ້ຊິດ ເພື່ອຮັບປະກັນຄວາມຮັບຜິດຊອບດ້ານການເມືອງ, ຈັນຍາບັນ, ຈັນຍາທຳ ແລະ ຜົນສຳເລັດການປະຕິບັດໜ້າທີ່ຂອງພະນັກງານກວດກາ.

3. ຕໍ່ມາດຕະການແກ້ໄຂຜົນການກວດກາ

ຄະນະປະຈຳສະພາແຫ່ງຊາດ ເຫັນດີຕໍ່ 10 ມາດຕະການແກ້ໄຂຜົນການກວດກາຕາມການສະເໜີຂອງອົງການກວດກາແຫ່ງລັດ; ພ້ອມກັນນີ້, ຄະນະປະຈຳສະພາແຫ່ງຊາດ ສະເໜີເອົາໃຈໃສ່ບາງມາດຕະການ ດັ່ງນີ້:

1) ເອົາໃຈໃສ່ປະຕິບັດກົດໝາຍວ່າດ້ວຍການກວດກາລັດ ມາດຕາ 24 ຂໍ້ 1, 2, 3 ແລະ ມາດຕາ 25 ໃຫ້ ສອດຄ່ອງກັບສະພາບຕົວຈິງ ແລະ ມີຜົນສັກສິດ.

2) ເອົາໃຈໃສ່ປະສານສົມທົບກັບອົງການຄຸ້ມຄອງເປົ້າໝາຍກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການແກ້ໄຂຜົນການກວດກາ ໃຫ້ມີຄວາມເປັນເອກະພາບທາງດ້ານຫລັກການ ແລະ ວິທີການ ເພື່ອຮັບປະກັນຄວາມສະເໝີພາບ ແລະ ຄວາມຍຸຕິທຳ ສຳລັບທຸກເປົ້າໝາຍທີ່ຖືກກວດສອບ;

3) ເອົາໃຈໃສ່ລາຍງານຜົນການຈັດຕັ້ງປະຕິບັດມາດຕະການແກ້ໄຂຜົນການກວດກາໃຫ້ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງ, ຕິດຕາມກວດກາ ແລະ ຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດການແກ້ໄຂຜົນການກວດກາ ໂດຍສອດຄ່ອງຕາມກົດໝາຍ, ທັນເວລາ, ມີປະສິດຕິພາບ ແລະ ປະສິດທິຜົນຫລາຍຂຶ້ນ.

ບັນຫາ...

ຖາມເຈາະຈີ້ມຂອງປະທານກອງປະຊຸມ ຂ້າພະເຈົ້າ ຂໍມີຄຳເຫັນບາງຈຸດເຊິ່ງສ່ວນຫລາຍຜູ້ແທນກໍໄດ້ມີຄຳເຫັນແລ້ວ.

ສະນັ້ນ, ຂ້າພະເຈົ້າ ຂໍມີຄຳເຫັນບາງຈຸດທີ່ຈະພິຈາລະນາເຂົ້າໃນມະຕິ ໂດຍສະເພາະບັນຫາງົບປະມານການລົງທຶນຂອງລັດໃນປີ 2023 ເຊິ່ງຕາມລັດຖະບານສະເໜີສະເພາະເບື້ອງແຜນງົບປະມານ ປົກກະຕິຈະຈັດສັນທັງໝົດໃນວົງເງິນທັງໝົດແມ່ນ 2.500 ຕື້ກີບ ເຊິ່ງເພີ່ມຈາກ 2.200 ຕື້ກີບ ໃນປີ 2022 ເພີ່ມຂຶ້ນປະມານ 23% ເຊິ່ງຕົວເລກນີ້ມັນຕິດພັນຕົວເລກຂາດດຸນງົບປະມານ ຂ້າພະເຈົ້າຄິດວ່າ ຈຸດໜຶ່ງທີ່ຜູ້ແທນພວກເຮົາຈະໄດ້ພິຈາລະນານຳກັນວ່າ ຖ້າຍາກເພີ່ມໂຄງການລົງທຶນຂອງລັດ ຖ້າມີຄວາມຈຳເປັນກໍຕ້ອງນຳມາພິຈາລະນາຂາດດຸນງົບປະມານຂາດດຸນງົບປະມານ 2,16% ສ່ວນມື້ກອງປະຊຸມຍົກສູງຄຸນນະພາບສະໄໝສາມັນເທື່ອທີ 4 ມີຜູ້ແທນບາງທ່ານໄດ້ຍົກຂຶ້ນເຂົາເຈົ້າເຫັນວ່າເປັນຄຳເຫັນທີ່ມີເຫດຜົນ ຄືສ່ວນປະເທດທີ່ກຳລັງພັດທະນາແມ່ນມີຄວາມຕ້ອງການລົງທຶນນັ້ນ ໂຕເລກຜ່ານມາມີ 4-5% ໝາຍວ່າຕ້ອງການລົງທຶນມີຄວາມຈຳເປັນຕ້ອງຍອມຮັບການຂາດດຸນໃນອັດສ່ວນທີ່ສົມເຫດສົມຜົນ ຜ່ານມາແມ່ນ 4-5% ເຊິ່ງດຽວນີ້ຖ້າວ່າ 2,16% ຖືວ່າຕ່ຳ ທີ່ຈິງກໍຖືວ່າງາມແລ້ວ ຕົວເລກຂາດດຸນຕ່ຳ ແຕ່ຖ້າວ່າອີງໃສ່ຄວາມຮຽກຮ້ອງຕ້ອງການພັດທະນາປະເທດກໍຈຳເປັນທີ່ຈະຕ້ອງພັດທະນາຕົວເລກທີ່ຂາດດຸນ ແລະ ສົມເຫດສົມຜົນ ຂ້າພະເຈົ້າຢາກຕັ້ງບັນຫາຂຶ້ນຕອນນີ້ເລີຍວ່າຂາດດຸນງົບປະມານ 2,16% ທີ່ຈິງກໍຕ່ຳຖ້າຫາກວ່າຢາກຕ້ອງການລາຍຈ່າຍຄວນເພີ່ມຕື່ມ ອາດຈະເພີ່ມຂາດດຸນສູງຂຶ້ນເປັນໄປໄດ້ບໍຂ້າພະເຈົ້າຍົກຂຶ້ນ ຖ້າຂາດດຸນສູງຂຶ້ນຈະພາແລ່ນຂຶ້ນອາດຈະມີໜີ້ພາຍໃນ ຫລື ພັນທະບັດເພີ່ມຂຶ້ນນີ້ດ້ານປັດໄຈໜຶ່ງ ແລະ ອີກບັນຫາໜຶ່ງຖ້າຫາກວ່າມີການເກັບລາຍຮັບກັບໜີ້ຕ້ອງຮັບນີ້ ສສຊ ໃໝ່ບາງທ່ານຍົກຂຶ້ນ ເຊິ່ງດຽວນີ້ພວກເຮົາກໍມີໜີ້ຕ້ອງຮັບລວມທັງໝົດປະມານ 50 ພັນກວ່າຕື້ ຍັງຄ້າງຢູ່ຕາມກວດສອບກວດກາ ຖ້າວ່າໄດ້ໂຕນີ້ ການຂາດດຸນກໍຈະຫລຸດລົງ ແຫລ່ງລົງທຶນຕື່ມອັນນີ້ແມ່ນຈຸດໜຶ່ງທີ່ຢາກຂໍແລກປ່ຽນ ເຊິ່ງຕົວເລກທີ່ຈະເອົາເຂົ້າໃນມະຕິສະພານັ້ນແມ່ນໂຕເລກການລົງທຶນລວມພາຍໃນນີ້ 2500 ຕື້ ກັບກາດຸນ 210 ຕື້ ສະພາແຫ່ງຊາດແຕ່ຫລາຍທ່ານຍົກຂຶ້ນໃນໂຄງປະກອບການຈັດສັນງົບປະມານ 2023 ຈະພິຈາລະນາເຂົ້າໃນມະຕິຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຮັບຮອງບັນຊີໂຄງການລົງທຶນຂອງລັດທີ່ມັນພົວພັນເຖິງໂຄງປະກອບການລົງທຶນ ເຊິ່ງມີຢູ່ນີ້ທາງດ້ານນິຕິກຳວ່າດ້ວຍການລົງທຶນຂອງລັດ ໂຄງປະກອບການລົງໄດ້ກຳນົດສະເພາະສູນກາງ ແລະ ທ້ອງຖິ່ນ ເຊິ່ງທ້ອງຖິ່ນບໍ່ໃຫ້ຫລຸດ 50% ສ່ວນຜ່ານມາແມ່ນອີງໃສ່ໂຕນີ້ ສ່ວນຂະແໜງການມີແຕ່ຂອງສຶກສາທິການ ໄດ້ກຳນົດໃນກົດໝາຍ ແຕ່ວ່າຂະແໜງການອື່ນບໍ່ໄດ້ກຳນົດ ສຳລັບຂະແໜງການ ກໍເປັນບັນຫາໜຶ່ງໃນກອງປະຊຸມຄັ້ງນີ້ ວັດທະນະທຳ-ສັງຄົມ ໄດ້ສະເໜີວ່າຕາມກົດໝາຍແມ່ນ 8% ແຕ່ປະສານຕົວຈິງແມ່ນ 12% ທຽບໃສ່ໂຕເລກການລົງທຶນລວມ ສະເໜີໃຫ້ເພີ່ມ 13% ໄດ້ບໍ ແມ່ນກຳມາທິການວັດທະນະທຳ-ສັງຄົມສະເໜີມາ ສຳລັບຂະແໜງການອື່ນ ຍັງບໍ່ໄດ້ສະເໜີ.

ຂ້າພະເຈົ້າຄິດວ່າ ເປັນຈຸດໜຶ່ງທີ່ຈະໄດ້ພິຈາລະນາ ທີ່ຈະໄດ້ເອົາເຂົ້າໃນມະຕິການຈັດສັນງົບປະມານສຳລັບຂະແໜງການ ສ່ວນ 3 ປະເພດໂຄງການທີ່ລົງທຶນທີ່ຜູ້ແທນຫລາຍທ່ານໃຫ້ຄວາມສົນໃຈທີ່ສຸດ ໃນຈຳນວນ 2500 ຕື້ ຈັດສັນໃຫ້ໂຄງການນີ້ຫລາຍປານໃດ ໂຄງການສືບຕໍ່ຫລາຍປານໃດ ໂຄງການໃໝ່ຫລາຍປານໃດ ຂ້າພະເຈົ້າຄິດວ່າເປັນຄຳຖາມທີ່ຕັ້ງຂຶ້ນຫລາຍທີ່ສຸດ ຂ້າພະເຈົ້າຄິດວ່າໂຕເລກໂຄງປະກອບນີ້ ພວກເຮົາອີງໃສ່ຂໍ້ມູນຕົວຈິງເພາະບາງໜີ້ສິນໂຄງການລົງທຶນຂອງລັດທັງໝົດແມ່ນມີເທົ່າໃດມູນຄ່າໃນການສືບຕໍ່ໂດຍສະເພາະໜ້າວຽກທີ່ປະຕິບັດສຳເລັດແລ້ວເທົ່າໃດ ແລະ ໂຄງການໃໝ່ທີ່ຈຳເປັນເທົ່າໃດອີງໃສ່ສັດສ່ວນຂອງຈຳນວນເງິນທີ່ຕ້ອງການໃຊ້ຈ່າຍທັງໝົດ ຈຶ່ງມາກຳນົດໂຄງປະກອບການຈັດສັນເໝາະສົມບໍໂຕນີ້ຂ້າພະເຈົ້າເຄີຍສະເໜີແລ້ວ ຖ້າວ່າຍັງຫລາຍແທ້ກໍຈັດສັນໃຫ້ໜີ້ ແຕ່ວ່າໜີ້ຫລຸດລົງກໍຈັດສັນໃຫ້ໜີ້ຫລຸດລົງ ຂ້າພະເຈົ້າຄິດວ່າເປັນບ່ອນອີງບ່ອນໜຶ່ງ ຢາກສະເໜີໃຫ້ລັດຖະບານ ໂດຍສະເພາະ ກໍຄືປະສານແລ້ວຂໍ້ມູນສະຖິຕິຕໍ່ບັນຫາໂຕນີ້ພວກເຮົາກໍຍັງບໍ່ທັນມີພຽງພໍ ມາຄົ້ນຄວ້າວິໄຈວ່າໜີ້ສິນມູນຄ່າການລົງທຶນຕົວຈິງແມ່ນເທົ່າໃດແທ້ ແລະ ໂຄງການໃໝ່ທີ່ຈຳເປັນທີ່ຈະຕ້ອງໄດ້ຈ່າຍໃນປີ 2023 ແມ່ນເທົ່າໃດແທ້ ຂໍສະເໜີວ່າຄວນໃຫ້ມີຂໍ້ມູນຈະແຈ້ງຊັດເຈນຕື່ມ ເພື່ອຈະສາມາດວິເຄາະວິໄຈຕື່ມ ໃຫ້ພິສູດໄດ້ໂຕເລກຕົວຈິງ ແລະ ໂຕສຸດທ້າຍທີ່ຢາກຈະສະເໜີທີ່ປະຊຸມພິຈາລະນາອີກ ລັດຖະບານກໍໄດ້ລາຍງານແລ້ວປີ 2023 ແລະ ມີບັນຫາໜຶ່ງທີ່ຕິດພັນກັບແຜນ ປີ 2023 ທີ່ພວກເຮົາຈະຮັບຟັງຕໍ່ໄປກໍຄືຜົນກວດສອບ ແລະ ກວດກາ ແຫ່ງລັດທີ່ຈະໄດ້ລາຍງານເຊິ່ງຜົນກວດສອບ ແລະ ກວດກາຈະເປັນແຫລ່ງລາຍຮັບ ຫລື ວ່າຈະເປັນຕົວດັດສົມແຜນງົບປະມານປີ 2023 ອັນນັ້ນຕາມວາລະກອງປະຊຸມຄັ້ງນີ້ ກໍຈະຮັບຮອງເອົາແຜນງົບປະມານກ່ອນຈະລາຍງານໂຄງການກວດສອບກວດກາ ດັ່ງນັ້ນວິຊາການລາຍງານເບື້ອງຕົ້ນນີ້ ໂຕຜົນກວດສອບກວດການີ້ທີ່ຈະເອົາເຂົາໃນແຜນງົບປະມານປີ 2022-2023 ອາດຈະໃຊ້ຢູ່ໃນມາດຕະການໃຫ້ມັນແຈ້ງວ່າສຳລັບກວດສອບກວດກາທີ່ຈະນຳເຂົ້າພິຈາລະນາໃນແຜນປີ 2023 ອາດຈະນຳເຂົ້າໄປພິຈາລະນາດັດແກ້ແຜນງົບປະມານ 6 ເດືອນທ້າຍປີ 2023 ໝາຍຄວາມວ່າຈະຕ້ອງເອົາເຂົ້າໃນແຜນ 6 ເດືອນທ້າຍປີ ສະນັ້ນ, ກໍເປັນຈຸດໜຶ່ງທີ່ຢາກເໜີແລກປ່ຽນກັບທີ່ປະຊຸມ ເພາະວ່າບັນດາຕົວຊີ້ວັດ ວິທີການກຳນົດດັ່ງກ່າວນີ້ຈະໃຫ້ມັນແຈ້ງໃນມະຕິກອງປະຊຸມສະພາແຫ່ງຊາດຄັ້ງນີ້ ຂ້າພະເຈົ້າຂໍມີຄຳເຫັນສໍ່ານັ້ນ.

ບັນຫາຄູ...

ຂ້າພະເຈົ້າເຫັນວ່າ ເລື່ອງຄູ ຫລືວ່າແພດນີ້ເປັນບັນຫາສຳຄັນ ຈັ່ງຊັ້ນເຮົາຈະແກ້ໄຂຄືແນວໃດ, ບັນຫານີ້ພວກເຮົາໄດ້ແກ່ຍາວຫລາຍແລ້ວຄູກັບແພດໃນຫລາຍປະເທດນີ້ແມ່ນເພິ່ນບໍ່ໄດ້ຖືວ່າເປັນພະນັກງານລັດ ໝາຍຄວາມວ່າບໍ່ຈຳເປັນຕ້ອງມີໂກຕ່າ ຈັ່ງຊັ້ນຂ້າພະເຈົ້າເຫັນວ່າພວກເຮົາຈະນຳໃຊ້ເລື່ອງພະລາກອນໄດ້ບໍ ເພື່ອເຮັດໃຫ້ບັນດາແພດ ຫຼືວ່າຄູອາຈານດັ່ງກ່າວນີ້ສາມາດຮັບໃຊ້ສັງຄົມໄດ້, ເຮັດແນວໃດເຮັດໃຫ້ຄົນເຫລົ່ານີ້ໆສ້າງເປັນຊັບພະຍາກອນມະນຸດນີ້ເປັນບັນຫາຕົ້ນຕໍ.

ບັນຫາທີສອງ ກ່ຽວກັບເລື່ອງການຊຸກຍູ້ການຜະລິດ. ຫລາຍທ່ານກໍໄດ້ປະກອບຄຳເຫັນໄປແລ້ວນັ້ນ ຂ້າພະເຈົ້າກໍເຫັນດີເປັນເອກະພາບນຳ, ແຕ່ວ່າຂ້າພະເຈົ້າເຫັນວ່າອັນໜຶ່ງການຜະລິດຂອງເຮົາ ເຖິງວ່າມີການຜະລິດຢູ່ ເຮົາມີການສົ່ງອອກ ແຕ່ວ່າການຜະລິດຂອງເຮົາຍັງບໍ່ທັນເປັນຕ່ອງໂສ້, ຍັງບໍ່ມີການຕ່ອງໂສ້ຢ່າງກົມກຽວກັນ. ຂ້າພະເຈົ້າຢາກໃຫ້ເຮົາເບິ່ງ ໂດຍສະເພາະແມ່ນວ່າພວກເຮົາຢາກໃຫ້ສຸມໃສ່ເລື່ອງການຜະລິດເຂົ້າ ເພາະວ່າພວກເຮົາເຮັດແມ່ນຊາວກະ ສິກອນຕົ້ນຕໍລະແມ່ນປູກເຂົ້າ ລະເຂົ້າເຮົາລະແມ່ນເຂົ້າດີ ເພາະວ່າແມ່ນວ່າພວກເຮົາໃຊ້ປຸຍຊີວະພາບ ເຂົ້າມີຄຸນນ ພາບ, ແຕ່ການສົ່ງອອກເຂົ້ານີ້ພວກເຮົາບໍ່ທັນໄດ້ເຫັນ ແລະ ຖ້າວ່າພວກເຮົາສາມາດຊຸກຍູ້ໄດດີນີ້ ຈະເປັນລາຍໄດ້ໃຫ້ແກ່ປະຊາຊົນ. ອັນນີ້ຂ້າພະເຈົ້າຢາກຂໍໃຫ້ເຮົາເບິ່ງແຕ່ເລີ່ມຕົ້ນ ໜຶ່ງລະແມ່ນການຈັດກຸ່ມການຜະລິດ, ສອງຖ້າວ່າເຮົາຜະລິດແລ້ວ ທາງລັດເຮົານີ້ຈະສະໜອງທຶນໄດ້ຄືແນວໃດ ເພື່ອໃຫ້ບັນດາບໍລິສັດ ຫລືວິສາຫະກິດນີ້ສາມາດໄປຊື້ເຂົ້ານຳປະຊາຊົນນີ້ໄດ້, ປະຈຸບັນນີ້ໂຄງການຜະລິດກໍຍັງໜ້ອຍ ເງິນທີ່ຈະໄປຊຸກຍູ້ສົ່ງເສີມ ໄປຊື້ເຂົ້ານຳປະຊາຊົນນີ້ກໍຍັງຍາກ ແລະ ຍັງມີອັນອື່ນໆອີກ. ເລື່ອງການນຳໃຊ້ເຕັກໂນໂລຊີ, ເລື່ອງການຊອກຕະຫລາດ ຂ້າພະເຈົ້າເຫັນວ່າຍັງບໍ່ທັນເປັນກົມກຽວກັນເທື່ອ ຍັງບໍ່ເປັນລະລົບແບບຕ່ອງໂສ້ ຊັ້ນຂໍຝາກໃຫ້ພາກສ່ວນກ່ຽວຂ້ອງນີ້ເອົາໃຈໃສ່ ແລະ ນອກຈາກນີ້ແມ່ນບັນຫາໜຶ່ງທີ່ສຳຄັນລະແມ່ນກ່ຽວກັບເລື່ອງປຸຍ ແລະ ຫົວອາຫານ ເລື່ອງນີ້ໆເປັນບັນຫາທີ່ຕົ້ນຕໍ ແລະ ທີ່ສຳຄັນມະຕິສະພາແຫ່ງຊາດພວກເຮົາໄດ້ອອກແລ້ວ ແຕ່ວ່າຍັງບໍ່ທັນເຫັນເໜັງຕິງຫຍັງເທື່ອ ຈັ່ງຊັ້ນຂໍໃຫ້ພວກເຮົາເອົາໃຈໃສ່ກັນລອງເບິ່ງ. ອັນຕໍ່ມາແມ່ນກ່ຽວກັບການຊຸກຍູ້ການທາງຜ່ານ ຂ້າພະເຈົ້າເຫັນພວກເຮົາເຫັນວ່າການປະຕິບັດນີ້ຖືວ່າຫລາຍທ່ານກໍໄດ້ປະກອບຄຳເຫັນໄປແລ້ວນັ້ນກ່ຽວກັບເລື່ອງທາງຜ່ານ ແລະ ເຊື່ອມໂຍງ, ແຕ່ວ່າລາຍໄດ້ຈາກທາງຜ່ານນີ້ ພວກເຮົາຍັງບໍ່ທັນເດັ່ນເທື່ອມາເຖິງປະຈຸບັນນີ້ໆ 10 ເດືອນຜ່ານມານີ້ ພວກເຮົາໄດ້ແຕ່ 15 ຕື້ ຂ້າພະເຈົ້າເຫັນວ່າຍັງໜ້ອຍຢູ່, ພວກເຮົາຕ້ອງເຮັດແນວໃດໃຫ້ເປັນແຫລ່ງລາຍຮັບອັນໃໝ່ໃຫ້ພວກເຮົາໄດ້ ພວກເຮົາຈະສາມາດເປັນ 100 ຕື້ໄດ້ບໍ່, ເປັນ 1000 ຕື້ໄດ້ບໍ່ ຈາກບໍລິການທາງຜ່ານນີ້ ພວກເຮົາເຫັນວ່າເລື່ອງບັນຫານີ້ໆຕ້ອງໄດ້ພ້ອມກັນແກ້ໄຂ ໂດຍສະເພາະເລື່ອງບັນດານິຕິກຳທີ່ວ່າໃຫ້ມັນສອດຄ່ອງກັນ ຂໍໃຫ້ພາກສ່ວນກ່ຽວຂ້ອງນີ້ເບິ່ງຄືນບັນດານິຕິກຳຕ່າງໆໃຫ້ມັນກົມກຽວກັນ, ວ່າແນວໃດເຮັດໃຫ້ການບໍລິການໃຫ້ມັນດີຂຶ້ນ. ອັນຕໍ່ມານີ້ກ່ຽວກັບເລື່ອງ ຂ້າພະເຈົ້າກໍເປັນຫ່ວງອັນໜຶ່ງ ພວກເຮົາກໍໄດ້ລົງຕິດຕາມກວດກາ ໂດຍສະເພາະແມ່ນຢູ່ບໍລິເວນຕາມຊາຍແດນ, ຕາມຕາຝັ່ງເຈື່ອນນີ້ພວກເຮົາເຫັນວ່າ ໃນແຕ່ລະປີພວກເຮົາມີການສູນເສຍໄປຫລາຍໃນແຕ່ລະແຂວງລະແມ່ນບໍ່ຕ່ຳກວ່າ 20 ແມັດ ແຕ່ລະປີນ້ຳລະກັດເຂົ້າມາກັດເຂົ້າມາ ລະພວກເຮົາຈະແກ້ໄຂຄືແນວໃດ, ບັນຫານີ້ມີການແກ່ຍາວມາຫລາຍປີແລ້ວ ຂ້າພະເຂົ້າຢາກສະເໜີວ່າເປັນໄປໄດ້ບໍ່ ວ່າພວກເຮົາຈັດສັນງົບປະມານແຕ່ລະປີນີ້ 20-30 ຕື້ສິບໍ່ໄດ້ບໍ ພວກເຮົາລະໃຫ້ມີການເຮັດກັນຕາຝັ່ງເຈື່ອນ, ພວກເຮົາຮັກດິນ ແຕ່ພວກເຮົາບໍ່ສາມາດຮັກສາໄດ້ດິນທີ່ວ່າພວກເຮົາສູນເສຍໄປໃນແຕ່ລະປີ.

ຕໍ່ກັບວຽກງານການເງິນນີ້ໂດຍລວມແລ້ວຂ້າພະເຈົ້າຂໍສະແດງຄວາມຊົມເຊີຍທາງກະຊວງການເງິນຖືວ່າການຈັດຕັ້ງປະຕິບັດການເກັບລາຍຮັບນີ້ແມ່ນສາມາດຈັດຕັ້ງປະຕິບັດໄດ້ເກີນແຜນໄດ້ 2 ປີແລ້ວ, ຊັ້ນຂ້າພະເຈົ້າເຫັນວ່ານີ້ຖືກຕ້ອງແລ້ວ ໂດຍສະເພາະແມ່ນທາງ ທ່ານລັດຖະມົນຕີ ເພິ່ນກໍສະເໜີເລື່ອງການເກັບລາຍຮັບທັນເປັນທັນສະໄໝ ຂ້າພະເຈົ້າເຫັນດີນຳ, ແຕ່ຂໍໃຫ້ເອົາໃຈໃສ່ນຳກັນ ໂດຍສະເພາະແມ່ນການເກັບອາກອນມູນຄ່າເພີ່ມນີ້ ຍັງບໍ່ທັນເຫັນເດັ່ນຂຶ້ນ ຂ້າພະເຈົ້າໄປກວດເບິ່ງຢູ່ໃນແຕ່ລະຫ້າງຮ້ານ, ຢູ່ໃນຮ້ານອາຫານດັ່ງກ່າວນີ້ ຍັງບໍ່ໄດ້ມີການມອບພັນທະອາກອນມູນຄ່າເພີ່ມ ພວກນີ້ໆແມ່ນສາມາດເກັບໄດ້ງ່າຍ ສະນັ້ນຂໍໃຫ້ມີການປັບປຸງຕື່ມ. ຕໍ່ມານີ້ເລື່ອງພາສີເຮົາໄດ້ມີການເກັບລາຍຮັບຢູ່ ແຕ່ວ່າພວກເຮົາຍັງບໍ່ທັນລວມສູນ, ໃຫ້ມັນທຸກສິນຄ້າລະແມ່ນຕ້ອງຜ່ານລະບົບ ແລະ ການຈ່າຍແມ່ນຈ່າຍຜ່ານລະບົບທະນາຄານ ໄລຍະຜ່ານມານີ້ແມ່ນຈ່າຍຜ່ານທະນາຄານທຸລະກິດ, ແຕ່ໃນປະຈຸບັນນີ້ຂໍໃຫ້ຈ່າຍຜ່ານທາງລະບົບທະນາຄານກາງ ເພາະວ່າເຮັດແນວໃດໃຫ້ມີການແຈກຢາຍ. ໂຕຕໍ່ມານີ້ແມ່ນເລື່ອງຊັບພະຍາກອນມະນຸດ ຂໍໃຫ້ທາງກະຊວງການເງິນເອົາໃຈໃສ່ ເພາະວ່າຊັບພະຍາກອນມະນຸດນີ້ເປັນບັນຫາທີ່ສຳຄັນຫຼາຍ ໂດຍສະເພາະອ້າຍນ້ອງພະນັກງານ, ເຈົ້າໜ້າທີ່ຂໍໃຫ້ມີຄຸນນະພາບ, ຂໍໃຫ້ມີຄວາມຮູ້ທາງດ້ານການບັນຊີ, ຂໍໃຫ້ມີຈັນຍາບັນ ອັນນີ້ເປັນບັນຫາທີ່ສຳຄັນຫລາຍ. ອັນສຸດທ້າຍນີ້ກ່ຽວກັບເລື່ອງການເກັບລາຍຮັບ ຂ້າພະເຈົ້າເຫັນວ່າຂໍໃຫ້ທາງພວກເຮົານີ້ເບິ່ງຄືນລອງເບິ່ງ ເພາະວ່າໃນປີ 2020 ນີ້ລະແມ່ນພວກເຮົາໄລ່ເບິ່ງອັດຕາແລກປ່ຽນປີນີ້ລະແມ່ນປະມານ 10,000 ແຕ່ວ່າລາຍຮັບນີ້ລະແມ່ນປະມານ 2,800 ຕື້ໂດລາ, 2023 ນີ້ລະແມ່ນ 38,000 ຕື້ຢູ່ ແຕ່ວ່າມັນມີຢູ່ປະມານ 2,500 ຕື້ໂດລາ ຈັ່ງຊັ້ນຂໍໃຫ້ພວກເຮົາເບິ່ງຄືນເລື່ອງແຜນລາຍຮັບນີ້ໆ.

# ການປະຢັດ ຕ້ອງເນັ້ນຫລຸດຜ່ອນການນຳເຂົ້າ



ຄຳເຫັນຂອງທ່ານ ສີນາວາ ສຸພານຸວົງ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ6ແຂວງຫລວງພະບາງ ຕໍ່ລັດຖະບານກ່ຽວກັບດຳລັດການປະຢັດ.

ຂ້າພະເຈົ້າມີຄວາມເຫັນຕໍ່ບັນຫາເລື່ອງການປະຫຍັດຄືກັນ ແຕ່ລະມື້ເຮົາເວົ້າເລື່ອງປະຢັດ ຕ້ອງປະຢັດ ດຽວນີ້ເງິນເຟີ້ເກືອບ 40% ແລ້ວ ບໍ່ຕ້ອງບອກໝົດທຸກຄົນປະຢັດຢູ່ແລ້ວ ສັກໜ້າບໍ່ເຖິງຫລັງຢູ່ແລ້ວເລື່ອງເງິນໃຊ້ຈ່າຍແຕ່ລະມື້, ແຕ່ສິ່ງທີ່ເຮົາເຂົ້າໃຈວ່າຄວາມປະຢັດນີ້ຍັງບໍ່ທັນກົມກຽວກັບສະພາບປະຈຸບັນເທື່ອ ກໍຍ້ອນວ່າຫຍັງ, ໜຶ່ງໃນການສິ້ນເປືອງຫລາຍທີ່ສຸດໃນປະເທດລາວເຮົາແມ່ນການຊື້ ແລະ ນຳເຂົ້າສິນຄ້າຈາກຕ່າງປະເທດ. ມື້ວານນີ້ມີຫລາຍທ່ານທີ່ເປັນ ສສຊ ຜູ້ຊົງກຽດທີ່ໄດ້ເວົ້າກ່ຽວກັບການທົດແທນການນຳເຂົ້າ ຂ້າພະເຈົ້າຍິນດີທີ່ສຸດກັບຄຳເວົ້ານີ້ ແລະ ເພື່ອລຶດອັດຕາການນຳເຂົ້າສິນຄ້າຈາກຕ່າງປະເທດ ແລະ ການສູນເສຍເງິນຕາຂອງເຮົານັ້ນ ເຮົາຕ້ອງໄດ້ທົດແທນດ້ວຍວິທີການຜະລິດ ເສີມຂະຫຍາຍການຜະລິດສິນຄ້າພາຍໃນປະເທດ ຂ້າພະເຈົ້າຍົກຕົວຢ່າງໜຶ່ງ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ທີ່ຜ່ານມາ ຂ້າພະເຈົ້າໄດ້ຍົກບັນຫານີ້ຂຶ້ນແລ້ວ ວ່າລາວມີທ່າແຮງທາງດ້ານແຮ່ທາດເວົ້າລວມ, ເວົ້າສະເພາະແມ່ນແຮ່ເກືອກາຣີ ເຊິ່ງເປັນວັດຖຸສຳຄັນ ສ່ວນປະກອບທີ່ສຳຄັນສານຕັ້ງຕົ້ນຂອງປຸ໋ຍເຄມີຫລືວ່າຝຸ່ນເຄມີ. ດຽວນີ້ໃນໂລກພວມຂາດຝຸ່ນເຄມີຢ່າງໜັກໜ່ວງ ມັນແມ່ນໂອກາດທີ່ລາວເຮົາ ຈະຕ້ອງມີແຜນສ້າງໂຮງງານຜະລິດປຸ໋ຍເຄມີຢູ່ໃນປະເທດ ເພື່ອນຳໃຊ້ພາຍໃນປະເທດ ແລະ ສົ່ງອອກຕ່າງປະເທດ, ທ່າແຮງຂອງລາວມີເທົ່າໃດ ຖ້າເຮົາໃຊ້ວັດຖຸດິບຂອງລາວເຮົາທີ່ມີເຮົາສາມາດຜະລິດ ແລະ ສົ່ງອອກປຸ໋ຍເຄມີ ສະເລ່ຍປີລະແຕ່ 8 ລ້ານໂຕນຫາ 10 ລ້ານໂຕນຕໍ່ປີ ຂ້າພະເຈົ້າເຄີຍເວົ້າຜ່ານລະ ແລະເຮົາຈະຕິດທ້ອບຝາຍໜຶ່ງໃນ 5 ປະເທດທີ່ສົ່ງອອກປຸ໋ຍເຄມີໃຫຍ່ທີ່ສຸດໃນໂລກ ຢາກໃຫ້ລັດຖະບານພິຈາລະນາອີກເທື່ອໜຶ່ງກ່ຽວກັບຄວາມວ່າປະຢັດ ເຮົາຕ້ອງເນັ້ນໃສ່ປະຢັດການນຳເຂົ້າ ຫລຸດຜ່ອນການນຳເຂົ້າສິນຄ້າຈາກຕ່າງປະເທດເຂົ້າລາວ ເພື່ອປະຢັດເງິນຕາຂອງພວກເຮົາ.

# ການແກ້ໄຂບັນຫາຢາເສບຕິດ



ບົດປະກອບຄຳເຫັນຂອງທ່ານ ປອ. ສຸກສະຫວັນ ໄຊສົມບັດ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ.

ກ່ອນອື່ນ ຂ້າພະເຈົ້າຂໍສະແດງຄວາມຍິນດີເປັນເອກະພາບຢ່າງສູງ ຕໍ່ກັບບົດລາຍງານຂອງທ່ານຮອງນາຍົກ ວ່າດ້ວຍການຈັດຕັ້ງປະຕິບັດວາລະແຫ່ງຊາດ, ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໄລຍະ 11 ເດືອນຜ່ານມາ ແລະ ທິດທາງແຜນການ ໃນປີ 2023 ຕໍ່ກັບຜົນງານ ແລະ ໝາກຜົນ ຄວາມມຸ່ງມະນາພະຍາຍາມຂອງຜູ້ຮັບຜິຊອບ ກໍຄືເຈົ້າໜ້າທີ່ ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍຢ່າງຈິງໃຈ ທີ່ເຮັດໜ້າທີ່ຢ່າງບໍ່ຮູ້ອິດ ຮູ້ເມື່ອຍ ແລະ ເຮັດໃຫ້ພວກເຮົາສາມາດກັກ ແລະ ຍຶດໄດ້ຜູ້ທີ່ກະທຳຜິດໄດ້ຢ່າງຫລວງຫລາຍ ດັ່ງທີ່ເປັນຂ່າວຄາວມານັ້ນ ກໍຂໍຊົມເຊີຍ ແຕ່ເຖິງຢ່າງໃດກໍຢ່າເຖິງວ່າເຈົ້າໜ້າທີ່ພວກເຮົາຈະມີການປາບປາມໄດ້ຫລາຍສ່ຳໃດ ແຕ່ຕາມການສັງເກດຕີລາຄານີ້ ກໍເຫັນວ່າສະພາບການແຜ່ລະບາດ ຫລື ວ່າການເພີ່ມຂຶ້ນຂອງຜູ້ກະທຳຄວາມຜິດຕໍ່ຢາເສບຕິດ ກໍເຫັນວ່ານັບມື້ຫລວງຫລາຍຂຶ້ນເລື້ອຍໆ ເຊິ່ງນຳເອົາຄວາມຫຍຸ້ງຍາກສັບສົນ, ວຸ້ນວາຍມາໃຫ້ສັງຄົມຂອງພວກເຮົາ ຂ້າພະເຈົ້າຢາກຂໍມີຄຳເຫັນແລກປ່ຽນວ່າ ຕໍ່ກັບບັນຫານີ້ທາງພາກສ່ວນທີ່ກ່ຽວຂ້ອງພວກເຮົາຈະໃຊ້ມາດຕະການແນວໃດຕື່ມ ເພື່ອໃຫ້ບັນຫາດັ່ງກ່າວນັບມື້ຖອຍລົງ ແລະ ກ້າວໄປເຖິງແກ້ໄຂສິ້ນເຊີງ ແຕ່ມາດຕະການນັ້ນຜ່ານມາພວກເຮົາກໍໄດ້ເວົ້າແລ້ວວ່າຜູ້ທີ່ຕ້ອງຫາຄ້າຂາຍ ນັບແຕ່ 2.000-3.000 ກລາມ ກໍມີໂທດເຖິງຂັ້ນປະຫານຊີວິດ ແຕ່ໃນຄວາມເປັນຈິງແລ້ວ ເຫັນໃນຂ່າວເຈົ້າໜ້າທີ່ກໍໄດ້ກັກຫລາຍກໍລະນີ ແຕ່ບໍ່ໄດ້ເຫັນຢູ່ໃນກໍລະນີວ່າໄດ້ລົງວິໄນຄືດັ່ງກ່າວນັ້ນ ຍ້ອນສາເຫດນັ້ນບໍ່ຈິ່ງເຮັດໃຫ້ສະພາບຂອງຢາເສບຕິດບໍ່ມີວັນນັບມື້ຖອຍລົງ ຍິ່ງນັບມື້ເພີ່ມຂຶ້ນ ແລະ ຫລາຍຂຶ້ນສັກໃຊ້ ຫລື ວ່າຜູ້ທີ່ເຮັດໜ້າທີ່ນີ້ ຄ້າຂາຍສິ່ງເສບຕິດນີ້ເຂົ້າໃຈວ່າກົດໝາຍມີແລ້ວ ແຕ່ບໍ່ໄດ້ປະຕິບັດຍິ່ງເຮັດໃຫ້ພວກກ່ຽວນີ້ເພີ່ມຈຳນວນໃນການຂົນສິ່ງຜະລິດດັ່ງທີ່ພວກເຮົາຮູ້ກັນ ແລະ ໃນນາມສ່ວນຕົວແລ້ວຕໍ່ກັບຄຳຖາມເຈາະຈີ້ມຂອງທ່ານປະທານ ນີ້ໃນຂໍ້ທີໜຶ່ງ ກໍຖືວ່າເຫັນດີແລ້ວໃນທິດທາງແຜນການຂອງກະຊວງ ປ້ອງກັນຄວາມສະຫງົບ ໃນດ້ານວຽກງານສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບຢາເສບຕິດນີ້ ເພື່ອເຮັດຈັ່ງໃດໃຫ້ນຳເຂົ້າສູ່ການປະຕິບັດຢ່າງເຂັ້ມງວດ ສຽບຂາດ ເພື່ອເຮັດໃຫ້ຜູ້ກະທຳຜິດນັ້ນມີຄວາມເຂັດລາບ.

ສ່ວນຂໍ້ທີ 4 ຕໍ່ກັບຄຳຖາມເຈາະຈີ້ມຂອງທ່ານປະທານ ເລື່ອງພາຫະນະ ຫລື ວ່າງົບປະມານທີ່ສະໜອງໃຫ້ເຈົ້າໜ້າທີ່ ທີ່ປະຕິບັດວຽກດັ່ງກ່າວນີ້ ຂ້າພະເຈົ້າກໍເຫັນໃຈ ເພາະວ່າໃນງົບປະມານຂອງລັດຖະບານນີ້ກໍມີຈຳກັດຄັ້ນເປັນໄປໄດ້ ຂ້າພະເຈົ້າກໍຢາກສະເໜີໃຫ້ນຳໃຊ້ງົບປະມານທີ່ຮິບໄດ້ຈາກຜູ້ກະທຳຜິດນັ້ນ ເປັນວັດຖຸ ເປັນເງິນແລ້ວສະໜອງໃຫ້ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະເຈົ້າໜ້າທີ່ທີ່ເຮັດວຽກ ຫລື ຮັບຜິດຊອບແກ້ໄຂຄະດີຢາເສບຕິດນີ້ໃຫ້ມີຄວາມວ່ອງໄວ ແລະ ທ່ວງທັນກັບເວລາ ການມີຄຳເຫັນຂອງຂ້າພະເຈົ້າກໍຈະມີເທົ່ານັ້ນ.



# ການຊົດເຊີຍ ສຳປະທານທີ່ດິນຍັງບໍ່ລົງລອຍ



ຄຳເຫັນຂອງທ່ານ ພັທ. ເນັ່ງສີດາ ເບຣຍລືມົວ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ຕໍ່ບົດລາຍງານລັດຖະບານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ກ່ອນອື່ນຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ເປັນເອກະພາບສູງຕໍ່ບົດລາຍງານຂອງລັດຖະບານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ, ແຜນເງິນຕາປີ 2021, 2022, 2023 ແລະ ການປະກອບຄຳເຫັນຂອງບັນດາທ່ານ ສສຊ ໃນນີ້ຂໍອະນຸຍາດແລກປ່ຽນມີຢູ່ 3 ຈຸດ:

**ຈຸດທີໜຶ່ງ** ຕໍ່ກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດນີ້ ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນຢູ່ໃນ 8 ໂຕຊີ້ບອກນີ້ນະ ໃນນັ້ນບັນລຸແຕ່ 6 ໂຕຊີ້ບອກ ແລະ ຍັງ 2 ໂຕຊີ້ບອກນີ້ ແມ່ນໃຫ້ຊີ້ບອກວ່າຍັງອີ່ຫຍັງທີ່ຍັງບໍ່ທັນສຳເລັດທັນໃຫ້ອະທິບາຍ ແລະ ກໍຊີ້ແຈງເຫດຜົນວ່າ ຍ້ອນອີ່ຫຍັງຈຶ່ງບໍ່ບັນລຸ ຕົວຢ່າງມາຊີ້ບອກທີ 1 ແມ່ນວຽກນີ້, ທີ 2 ແນວນັ້ນເນາະ ເພື່ອໃຫ້ມັນແຈ້ງຕື່ມຢູ່ໃນບົດລາຍງານ ແລະ ການຂະຫຍາຍກ່ຽວກັບດ້ານເສດຖະກິດຢູ່ໃນ 4,4% ຫັນມາ ຢູ່ໃນແຜນການແມ່ນ 4,5% ບາດນີ້ສະເລ່ຍແລ້ວຫົວຄົນລະແມ່ນ 1.841 ໂດລາ ແຕ່ວ່າຢູ່ໃນນີ້ຫັ້ນແມ່ນຄິດໄລ່ຕາມຫລັກສູດເທົ່ານັ້ນ, ແຕ່ໃນຕົວຈິງແລ້ວແມ່ນປະຊາຊົນຢູ່ເຂດຫ່າງໄກສອກຫລີກ, ເຂດນອກແມ່ນຍັງທຸກຍາກຫລາຍ ສະເລ່ຍແລ້ວລະແມ່ນບໍ່ບັນລຸ 100 ໂດລາຕໍ່ຄົນຕໍ່ປີ ຍ້ອນສະພາບເສດຖະກິດຫຍຸ້ງຍາກຂາດເຂີນ ແລະ ບໍ່ມີລາຍຮັບ ອັນນີ້ແມ່ນເປັນບັນຫາຫຍຸ້ງຍາກ ແລະ ສະເໜີໃຫ້ລັດຖະບານນີ້ໃຫ້ມີນະໂຍບາຍໃນການສົ່ງເສີມການຜະລິດກະສິກຳ, ການປູກ, ການລ້ຽງເນາະ ໃຫ້ມັນຫລາຍຂຶ້ນຢູ່ພາຍໃນນີ້ນະເພື່ອສົ່ງອອກອັນນີ້ລະເປັນທຶນກ່ຽວກັບ ໃນການລົງທຶນຂອງກະສິກຳນີ້ໆແມ່ນ ຖືວ່າຈຳກັດບໍ່ມີເງື່ອນໄຂ ຢູ່ໃນເຂດຫ່າງໄກສອກຫລີກ.

**ຈຸດທີສອງ** ຕໍ່ກັບແຜນງົບປະມານແຫ່ງລັດປີ 2022-2023 ນີ້ລະແມ່ນຄາດຄະເນລາຍຮັບຢູ່ໃນປີ 2022 ນີ້ແມ່ນຈະຢູ່ 32,447 ຕື້ກີບ, ບາດນີ້ລາຍຈ່າຍນີ້ແມ່ນຄາດຄະເນວ່າຈະຈ່າຍຢູ່ 34.553 ຕື້ກີບ, ແຕ່ຢູ່ໃນນີ້ມີຄຳໜຶ່ງວ່າ ຢູ່ນີ້ຫັນຈະໄດ້ຫລຸດຜ່ອນກະແສຈ່າຍ ຫລືວ່າຖືກປະຢັດໄດ້ 138 ຕື້ ນີ້ເອົາມາແຕ່ໃສດຽວນີ້ເນາະ ເພາະວ່າຕາມການຄິດໄລ່ ບວກລົບ ຄູນ ຫານ ນີ້ລະແມ່ນ ຖ້າວ່າລາຍຈ່າຍນີ້ຫລາຍກວ່າລາຍຮັບນີ້ນະ ແມ່ນພວກເຮົາຈະຕິດລົບ ຂາດດຸນຢູ່ໃນ 2.106 ຕື້.

**ຈຸດທີສາມ** ການປະຕິບັດແຜນເງິນຕານີ້ໆແມ່ນຕາມການຕີລາຄາຢູ່ໃນ 9 ເດືອນຜ່ານມານີ້ແມ່ນມັນຈະຢູ່ໃນລະດັບທີ 17,3% ແລະ ໝົດປີ 2022 ນີ້ແມ່ນຈະຢູ່ໃນ 22,2% ແຕ່ມະຕິຮັບຮອງຂອງສະພານີ້ບໍ່ໃຫ້ເກີນ 5% ເຫັນວ່າຕົວເລກນີ້ຂຶ້ນສູງຫລາຍໃດ່ ຄັ້ນມາທຽບໃສ່ຫລາຍໃດ່ຫລາຍເປີເຊັນ ແລະ ອັດຕາແລກປ່ຽນເງິນກີບນີ້ທຽບໃສ່ເງິນໂດລາອ່ອນຄ່າຢູ່ໃນລະດັບ 19,44%, ເງິນບາດນີ້ແມ່ນ 18,02% ແລະ 2 ຕົວເລກເງິນບາດ ກັບເງິນໂດລານີ້ແມ່ນໃກ້ຄຽງກັນ, ໃນເມື່ອສະແດງໃຫ້ເຫັນວ່າເງິນກີບນີ້ອ່ອນຄ່າແຮງ ຊັ້ນຈຶ່ງເກີນ



ກ່ຽວກັບມະຕິຮັບຮອງຢູ່ໃນ 5% ບໍ່ໃຫ້ເກີນ. ຊັ້ນສະເໜີໃຫ້ ຢາກສະເໜີມາຍັງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງນີ້ ຢາກໃຫ້ຊອກວິທີທາງມາແກ້ໄຂເພື່ອຮັບປະກັນໃນຄວາມໝັ້ນທ່ຽງຂອງຄ່າເງິນກີບນີ້ໃຫ້ມັນສູງຂຶ້ນຕື່ມ ແລະ ໃຫ້ຫລຸດຜ່ອນໃນການແບກຫາບຫລາຍອັນ ຖືວ່າຍັງເປັນພາລະເນາະ. ອັນທີ 3 ນີ້ໂຕເລກມູນຄ່າໃນການຄ້າເກີນດູນຢູ່ໃນເກືອບ 657,01 ລ້ານໂດລາ ນີ້ນະ, ຖືວ່າຢູ່ໃນນີ້ຜ່ານລະບົບທະນາຄານມີແຕ່ 36,4%, ແລ້ວບໍ່ຜ່ານທະນາຄານ 87,79% ນີ້ມັນສະແດງຢ່າງຈະແຈ້ງວ່າການຄຸ້ມຄອງກົນໄກໃນການບໍ່ທັນເຂົ້າສູ່ລະບົບທີ່ແນ່ນອນ, ຍັງເລື່ອນລອຍຢູ່ນອກລະບົບຫລາຍເຖິງ 80% ແລະ ຍ້ອນສາເຫດອີ່ຫຍັງມັນຈຶ່ງບໍ່ທັນເຂົ້າສູ່ລະບົບທະນາຄານນີ້ເນາະ ຢາກໃຫ້ຮູ້ສາເຫດຂອງມັນ ເປັນຫຍັງມັນຈຶ່ງບໍ່ເຂົ້າສູ່ລະບົບທະນາຄານນີ້ ຈະເລື່ອນລອຍຢູ່ເທິງອາກາດນີ້ນະ ລະບໍ່ເຂົ້າສູ່ລະບົບມັນຈະພາໃຫ້ລະບົບພວກເຮົານີ້ມີບັນຫາຫຍຸ້ງຍາກເລື່ອງລາຍຮັບ ແລະ ສະເໜີລັດຖະບານນີ້ມີວິທີແກ້ໄຂ ແລະ ມີມາດຕະການບັງຄັບ, ແກ້ໄຂໃຫ້ເຂົ້າສູ່ລະບົບຢ່າງເຂັ້ມງວດ ອັນນີ້ລະແມ່ນຢາກສະເໜີ.

ບາດນີ້ຄຳສະເໜີຂອງປະຊາຊົນມາເຖິງສະພານີ້ແມ່ນ ອັນທີ 1 ແມ່ນການຊົດເຊີຍທີ່ດິນສຳປະທານຢູ່ເຂດສະໜາມບິນສາກົນ ດຽວນີ້ມີຈຳນວນໜຶ່ງ ຄອບຄົວນີ້ທີ່ວ່າການໄກ່ເກ່ຍນີ້ບໍ່ລົງລອຍເລື່ອງຄ່າຊົດເຊີຍ ບໍ່ເປັນເອກະພາບກັນ ຢູ່ຫັ້ນຈະມີ 6 ຄອບຄົວ, 7 ຄອບຄົວ ນີ້ລະແມ່ນຈະມີຢາງພາລາ ແລະ ຈະມີນາແດ່, ບາດນີ້ເວລາມາເວົ້າກັນນີ້ແມ່ນບໍລິສັດໃຫ້ລາຄານີ້ຕ່ຳເກີນໄປ ແລະ ປະຊາຊົນບໍ່ສາມາດຈະໃຫ້ໄດ້ວ່າຊັ້ນສາເນາະ ປະຊາຊົນມາອາໄສໃສ່ຢາງພາລາແຕ່ລະປີເຂົ້າກິນກໍອາໄສຢູ່ຫັ້ນ ແລະ ຈິດໃຈຂອງປະຊາຊົນແມ່ນຢາກໃຫ້ຊົດເຊີຍ ແລະ ໃຫ້ໄປຊື້ຢູ່ບ່ອນອື່ນໃຫ້ມັນທົດແທນໄດ້ຈິດໃຈນະ ແລະ ຈຸດທີ 2 ແມ່ນຈຸດຢູ່ວັດເກົ່າສຸວັນນະພົມຄຳ ຈຸດນີ້ກໍຫຍຸ້ງຍາກ ຫຍຸ້ງຍາກວ່າປະຊາຊົນທຳການຜະລິດແຕ່ພໍ່ແມ່ແຕ່ປູ່ຍ່າມາ ບາດນີ້ບໍລິສັດມາສຳປະທານຫັ້ນລະແມ່ນໃຫ້ລາຄາຕ່ຳ ໃຫ້ແຕ່ໄລຍະໜຶ່ງມີແຕ່ 90.000 ບາດ (ເກົ້າໝື່ນບາດ) ບາດນີ້ມາປະຊາຊົນບໍ່ເຫັນດີວ່າ 90.000 ບາດ (ເກົ້າໝື່ນບາດ) ໄປຊື້ບ່ອນອື່ນມັນທົດແທນບໍ່ໄດ້ແລ້ວໃນການຜະລິດນະເນາະທົດແທນບໍ່ໄດ້ໃນເມື່ອເປັນແນວນັ້ນລະແມ່ນຈຶ່ງຂໍວ່າໃຫ້ທົດແທນລະດັບ 150.000 ເຖິງ 200.000 ບາດ ນີ້ປະຊາຊົນເຫັນດີເອກະພາບ ບໍ່ແມ່ນເຂົາບໍ່ທົດແທນ ຢູ່ຫັ້ນລະແມ່ນມີພະນັກງານຈຳນວນໜຶ່ງໄປຫາປະຊາຊົນ ລະແມ່ນໃຫ້ປະຊາຊົນນີ້ອັບປະໂຫຍດ, ບໍ່ມີຊ່ອງທາງແກ້ໄຂ ຊັ້ນອັນນີ້ກໍເປັນບັນຫາຫຍຸ້ງຍາກອັນນີ້ແມ່ນຕົວຈິງໃດ່ເນາະ ເຮົາກໍໄປແກ້ໄຂຫາກໍມາແຕ່ບໍ່ແລ້ວ ຍັງສືບຕໍ່ແກ້ໄຂຢູ່ບັນຫານີ້ນະເລື່ອງສຳປະທານ ແລະ ນອກຈາກນີ້ກໍຢາກສະເໜີແນວນີ້ນຳລັດຖະບານກ່ຽວກັບ ອີກສະພາບຄວາມຫຍຸ້ງຍາກທາງເສດຖະກິດ ໃນປັດຈຸບັນນີ້ ຢາກໃຫ້ລັດຖະບານຄົ້ນຄວ້າກ່ຽວກັບດັດສະນີເພີ່ມເງິນເດືອນນີ້ແລະ ໃຫ້ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫລວດເນາະ ກໍມີຄວາມຫຍຸ້ງຍາກຫລາຍ ແລະ ອັນທີ 2 ວ່າເລື່ອງເຂົ້າກິນນີ້ ລາຄາເຂົ້າແຕ່ກີ້ແມ່ນກ່ອນນີ້ 5 ປີກ່ອນນີ້ແມ່ນທາງເທິງກຳນົດລະແມ່ນ ກິໂລ 1 ພວກເຮົາໃຫ້ແຕ່ 10.500 ດຽວນີ້ 10.500 ໄປຊື້ເຂົ້າກິນໂລ 1 ບໍ່ໄດ້ແລ້ວເນາະ ແລະ ໃຫ້ຂັ້ນເທິງພິຈາລະນາຊ່ວຍ ເຈົ້າ.

# ເປັນຫ່ວງການອອກພັນທະບັດ



ຄຳເຫັນຂອງທ່ານ ນາງ ວາລີ ເວດສະພົງ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ.

ຂ້າພະເຈົ້າ ຂໍມີຄວາມເຫັນໃສ່ບົດຂອງກະຊວງແຜນການ ໂດຍສະເພາະແມ່ນໜ້າ 7 ຢາກໃຫ້ເບິ່ງຕົວເລກຄືນ ບໍ່ຮູ້ວ່າເພິ່ນຄອນເວີດເປັນເງິນກີບເປັນເງິນໂດລານີ້ຖືກບໍ່ ເພາະປະກົດວ່າມັນມີ 2 ອັດຕາແລກປ່ຽນ ຍົກຕົວຢ່າງວ່າ ການຊ່ວຍເຫລືອຫລ້າ 2.597,80 ຕື້ເທົ່າກັບ 167,6 ລ້ານໂດລາ, ລະກະ 2.359,49 ຕື້ ເງິນກູ້ຢືມເທົ່າກັບ 236,01 ລ້ານ ຢາກໃຫ້ເບິ່ງຕົວເລກຄືນເນາະ ຖ້າວ່າໂຕເລກນີ້ຜິດມັນຈະໄປກະທົບເປັນໂດມິໂນ ໃນເລື່ອງຂອງຕົວເລກການວາງແຜນ, ຕົວເລກຂອງການຊຳລະໜີ້ທີ່ເປັນເງິນຕາຕ່າງປະເທດ ອັນນີ້ແມ່ນຢາກຂໍໃຫ້ເບິ່ງຄືນ, ອັນນີ້ແມ່ນຂ້າພະເຈົ້າເຫັນນີ້ຍັງບໍ່ໄດ້ເບິ່ງລະອຽດ ລະຢາກຮູ້ວ່າຕົວເລກອື່ນມັນຊິຜິດ ຫລືບໍ່ ຢາກໃຫ້ເອົາໃຈໃສ່ຕື່ມໃນບົດຂອງກະຊວງແຜນການ. ບາດນີ້ບົດຂອງທະນາຄານກາງຖືວ່າເປັນບົດທີ່ດີຫລາຍອ່ານເຂົ້າໃຈງ່າຍ ແລະ ເຫັນພາບທີ່ຈະແຈ້ງ ໃນການແກ້ບັນຫາເປັນລະບົບ, ຂ້າພະເຈົ້າຢາກຂໍຕື່ມໃສ່ ໂດຍສະເພາະແມ່ນວຽກງານຂອງການຄຸ້ມຄອງເງິນຕາຕື່ມໃສ່ໄດ້ບໍ່ວ່າເຮົາຈະຈຳກັດຈຳນວນຮ້ານແລກປ່ຽນ ເພາະວ່າຂະໜາດເສດຖະກິດຂອງເຮົາ, ຂະໜາດການບໍລິການນັກທ່ອງທ່ຽວຂອງເຮົາມັນເກີນຈຳນວນນີ້ມັນເກີນຄວາມຈຳເປັນ ຫລືບໍ່ ອັນນີ້ຢາກໃຫ້ມີເປົ້າໝາຍວ່າເຮົາຢາກຈຳກັດລົງຈຳນວນ, ອັນນີ້ແມ່ນຢາກໃຫ້ ບໍ່ຮູ້ວ່າຈະພິຈາລະນາໄດ້ບໍ່ເນື່ອງຈາກວ່າຈຳນວນມັນຫລາຍເກີນໄປແລ້ວເຮົາຄຸມມັນບໍ່ໄດ້ ອັນນີ້ຢາກໃຫ້ທາງທະນາຄານກາງເບິ່ງຕື່ມ. ບາດນີ້ຂ້າພະເຈົ້າຈະຂໍເຂົ້າໃນພາກຂອງຂ້າພະເຈົ້າສົນໃຈໃນເລື່ອງພັນທະບັດເຫດຜົນທີ່ຜ່ານມາຄືມື້ກີ້ນີ້ອອກພັນທະບັດ 5.000 ຕື້ ເຫດຜົນກໍຄືເພື່ອດູດປະລິມານ M2 ຢູ່ໃນຕະຫລາດທີ່ຄິດວ່າມັນເກີນ, ແຕ່ວ່າຜ່ານມາໃນການຂາຍພັນທະບັດນີ້ 4.614 ຕື້ ຮອດວັນທີ 15 ເດືອນ 11 ໄດ້ປະມານ 92,28%, ຄຳຖາມຂ້າພະເຈົ້າກໍຄືຢາກຮູ້ວ່າ ປະລິມານເງິນທີ່ມັນເກີນໃນຕະຫລາດ ປະລິມານ M2 ທີ່ທາງລັດຖະບານຄາດວ່າມັນເກີນແລ້ວຈຶ່ງເລີ່ມດູດເຂົ້ານີ້ນ່າ ຢາກຮູ້ວ່າມັນມີສ່ວນເກີນຫລາຍປານໃດ, ເກີນຢູ່ຈຸດໃດ ເຊັ່ນວ່າ: ເກີນຢູ່ບຸກຄົນ, ເກີນຢູ່ທຸລະກິດ ຫລື ເກີນຢູ່ສະຖາບັນການເງິນ ໂຕນີ້ສຳຄັນຫລາຍທ່ານປະທານ ເພື່ອເຮົາມາວິເຄາະການວາງແຜນຕໍ່ໄປວ່າ ເຮົາຈະອອກພັນທະບັດຕື່ມ ຫລືວ່າເຮົາຈະບໍ່ອອກພັນທະບັດຕື່ມ, ໂຕນີ້ແມ່ນມີຜົນສຳຄັນທີ່ສຸດ ອັນນີ້ແມ່ນຂ້າພະເຈົ້າຢາກໃຫ້ທະນາຄານກາງຊ່ວຍເວົ້າໃຫ້ຟັງແດ່ວ່າມັນເກີນນັ້ນເກີນຢູ່ຈຸດໃດແດ່, ຢາກຮູ້ປະລິມານທີ່ເກີນໄປ. ສະນັ້ນ ຖ້າວ່າເປັນຄືຂ້າພະເຈົ້າຄິດ ຖ້າວ່າມັນເກີນເປັນການດູດປະລິມານ M2, ຖ້າມັນອອກຈາກສະຖາບັນການເງິນ ເອົາເງິນຝາກມາຊື້ພັນທະບັດ ໂຕນີ້ແຮ່ງຊິກະທົບແຮງໄປຕື່ມອີກ, ໃນເລື່ອງຂອງສະພາບຄ່ອງຂອງສະຖາບັນການເງິນແຮ່ງໜັກກວ່າໃນທີ່ຜ່ານມາ ອັນນີ້ແມ່ນຂ້າພະເຈົ້າຢາກໃຫ້ເບິ່ງຄືນໃນເລື່ອງຂອງໂຕນີ້. ສະນັ້ນການດູດເຂົ້າກໍບໍ່ຢາກໃຫ້ມີການຜະລິດອອກ ອັນນີ້ແມ່ນຢາກໃຫ້ຂໍການທົບທວນເບິ່ງຄືນວ່ານະໂຍບາຍການຫັນການອອກພັນທະບັດນີ້ມັນສິບໍ່ເປັນລັກສະນະງູກິນຫາງບໍ່ ເອົາໂຕນີ້ມາຖົມໂຕນີ້ ຍົກຕົວຢ່າງ: ຢາກໃຫ້ທາງທະນາຄານກາງທົບທວນຄືນ ແລະ ໃຫ້ເອົາດາຕ້າມາວິໄຈຄັກແນ່ວ່າຜົນໄດ້ກັບຜົນເສຍນີ້ມັນແນວໃດ ເຮົາເຮັດມາແລ້ວສະພາບກໍບໍ່ໄດ້ຕາມທີ່ເຮົາຄາດຫວັງໄວ້ ອັນນີ້ແມ່ນສຳຄັນແທ້ໆແມ່ນຢາກຮູ້ປະລິມານເງິນເກີນໃນຕະຫລາດນັ້ນ ອັນນີ້ແມ່ນສຳຄັນຫລາຍທ່ານປະທານ.



ຂໍ້ທີສອງມາແມ່ນ ຖ້າເປັນດັ່ງຂ້າພະເຈົ້າຄິດ ເປັນຫ່ວງວ່າການອອກພັນທະບັດເລື້ອຍໆແບບນີ້ມັນຈະເປັນລັກສະນະງູກິນຫາງ ມັນຕິດພັນກັບການເພີ່ມໜີ້ສາທາລະນະ ອັນນີ້ມັນຈະເພີ່ມໄປເລື້ອຍໆ ລະເຮົາຈະດັດສົມກັນແນວໃດ. ອັນນີ້ແມ່ນຄຳຖາມທີ່ຂ້າພະເຈົ້າຢາກໃຫ້ທະນາຄານກາງຊ່ວຍອະທິບາຍຕື່ມ ຖ້າເປັນໄປໄດ້ໃຫ້ ສສ ພວກເຮົາຮູ້ນຳແດ່, ບາດນີ້ໃນແງ່ຂອງບົດລາຍງານນີ້ເຫັນວ່າເຮົາມີການເກີນດຸນ ແຕ່ເງິນກໍບໍ່ໄດ້ຜ່ານຊຳລະເຂົ້າທະນາຄານຄືກັນກັບຂ້າພະເຈົ້າມີຄຳເຫັນເທື່ອແລ້ວນີ້ ອັນນີ້ກໍຂໍຊົມເຊີຍທີ່ວ່າທະນາຄານກາງກໍເຫັນໃນທິດທາງດຽວກັນ, ບາດນີ້ພວກເຮົາມີການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາແລ້ວ ຢາກຮູ້ວ່າເມື່ອໃດເຮົາຈະໃຊ້ ເພາະວ່າອັນນີ້ມັນສຳຄັນຕິດພັນກັບວຽກເຮົາຈະແກ້ໄຂບັນຫາໂຕນີ້ທ່ານປະທານ ເພາະວ່າໃນໃບແຈ້ງການ ຫລືລະບຽບການຕ່າງໆທີ່ ທຫລ ໄດ້ອອກມາຜ່ານມາຫັ້ນບາງອັນມັນຈະມາຂັດກັບກົດໝາຍສະບັບປັບປຸງນີ້ຫລືບໍ່, ລະມື້ໃດເຮົາຈະເຮັດນິຕິກຳໃຕ້ກົດໝາຍໃນບົດລາຍງານກໍເຫັນວ່າກຳລັງຈະເຮັດ 25 ສະບັບ ແຕ່ຢາກໃຫ້ເລັ່ງໜ້ອຍໜຶ່ງວ່າ ໃຫ້ການປະຕິບັດກົດໝາຍໂຕນີ້ໃຫ້ປາກົດຜົນເປັນຈິງໄວໆ, ເນື່ອງຈາກວ່າມັນຕິດພັນກັບວຽກງານຂອງການເງິນ ວຽກງານການເງິນນີ້ກໍຄືຂ້າພະເຈົ້າໄດ້ເວົ້າ ເປັນໜຶ່ງໃນເສົາຄ້ຳຫລັກຂອງເສດຖະກິດມະຫາພາກ, ຫາກຖ້າແກ້ບັນຫາໂຕນີ້ໄດ້ບັນຫາອື່ນໆກໍຈະແກ້ໄປຕາມໆກັນໄດ້ ຂ້າພະເຈົ້າຄິດວ່າບໍ່ວ່າຈະເປັນເລື່ອງເງິນເຟີ້ ເຖິງວ່າປັດຈຸບັນນີ້ກໍເດືອດຮ້ອນກັນທົ່ວໜ້າ, ແຕ່ກໍເຂົ້າໃຈວ່າມັນມີປັດໄຈພາຍນອກມາມີບົດບາດທີ່ສຳຄັນ, ແຕ່ວ່າໃນຂະນະດຽວກັນປັດໄຈພາຍໃນຂອງພວກເຮົາກໍຕ້ອງແກ້ໃຫ້ມັນໄປຕາມທິດສະດີທີ່ຄວນເປັນ ແລະ ບັນຫາສຳຄັນແມ່ນຕົວຈິງທີ່ເກີດຂຶ້ນເອົາຂໍ້ມູນດັ່ງກ່າວມາວິໄຈ, ວິເຄາະຄັກແນ່ ໂຕນີ້ແມ່ນຂ້າພະເຈົ້າຢາກສະເໜີຕື່ມ. ບາດນີ້ຢາກສະເໜີວ່າແທນທີ່ສິອອກພັນທະບັດຫັ້ນນ່າ ໃນມະຕິສະພາສະບັບເລກທີ 55, ວັນທີ 8 ເດືອນ 7 ຫວ່າງແລ້ວນີ້ ທ່ານປະທານເຮົາໄດ້ບອກວ່າໜີ້ຕ້ອງຮັບ ສະພາໄດ້ກຳນົດຄັກແນ່ວ່າ ໜີ້ຕ້ອງຮັບທີ່ລັດຖະບານໄດ້ປ່ອຍກູ້ ແລະ ຄ້ຳປະກັນໃຫ້ບັນດາລັດວິສາຫະກິດ ແລະ ວິສາຫະກິດເອກະຊົນໃນໄລຍະຜ່ານມານັ້ນຕາມຂໍ້ຕົກລົງເລກທີ່ທໍ່ນັ້ນທໍ່ນີ້, ລົງວັນທີທໍ່ນັ້ນທໍ່ນີ້ ພວກເຮົາເກັບຄືນມາໄດ້ຫລາຍປານໃດແລ້ວ ຢູ່ໃນບົດລາຍງານບໍ່ປາກົດເຫັນໂຕເລກວ່າ ລັດຖະບານເກັບຄືນມາໄດ້ຫລາຍປານໃດແລ້ວ, ຖ້າວ່າເກັບຄືນມາໄດ້ໂຕນັ້ນເອົາໂຕນີ້ໄປຖົມໂຕແທນທີ່ວ່າຊິອອກພັນທະບັດນີ້ ເຮົາສິໃຫ້ງູກິນຫາງສິບໍ່ດີກ່ອນບໍ ອັນນີ້ແມ່ນທັດສະນະຂ້າພະເຈົ້າຄິດວ່າວິທີການແກ້ໄຂບັນຫາແມ່ນການບໍລິຫານສິນຊັບຂອງເຮົາທີ່ມີຢູ່ໃນມື ຖ້າວ່າເຮົາບໍລິຫານໃນທັດສະນະຂ້າພະເຈົ້າຄິດວ່າຖ້າເຮົາບໍລິຫານໄດ້ ກໍຄິດວ່າເຮົາບໍ່ຄວນຈະກໍ່ໜີ້ເພີ່ມຂຶ້ນອີກເນາະເຈົ້າ ເວລາໝົດ.

# ພວກເຮົາຍັງຂາດການສົ່ງເສີມການຜະລິດພາຍໃນ



ຄຳເຫັນຂອງທ່ານ ສຸກສຳລານ ໄຊຍະແສງ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 17 ແຂວງອັດຕະປື ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ.

ຂ້າພະເຈົ້າຂໍມີຄຳເຫັນຢູ່ບາງຈຸດ ແລະ ເອກະພາບກັບບັນດາຄຳເຫັນ ສສຊ ແຕ່ລະທ່ານ ທີ່ມີຄຳເຫັນແລ້ວນີ້, ຂ້າພະເຈົ້າສັງເກດເຫັນຢູ່ໃນແຜນບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມໃນປີ 2022 ນັ້ນ ແລະ ສັງເກດເຫັນວ່າ GNI ຫລຸດຄາດໝາຍ ປະຕິບັດໄດ້ພຽງ 1.729 ໂດລາຕໍ່ຄົນ ແລະ ແຜນແມ່ນ 2.003 ອັນນີ້ບັນຫາສາເຫດ ກໍເປັນບັນຫາແກ່ຍາວມາຖືວ່າຕິດຕໍ່ກັນຫລາຍປີ ສາເຫດນີ້ອາດຈະມາຈາກຫລາຍສາເຫດ ທັງປັດໄຈພາຍໃນ ແລະ ພາຍນອກ, ແຕ່ຂ້າພະເຈົ້າແລກປ່ຽນບັນຫາໜຶ່ງທີ່ເຫັນວ່າເປັນບັນຫາຕົ້ນຕໍນີ້ ລາຍຮັບຫົວຄົນ ການຜະລິດພາຍໃນນີ້ ພວກເຮົາຍັງຂາດການສົ່ງເສີມການຜະລິດພາຍໃນນີ້ ຄືຜູ້ແທນແຕ່ລະຄົນມີຄຳເຫັນນັ້ນ. ສ່ວນການຜະລິດພາຍນອກສົ່ງອອກ ພວກເຮົາກໍມີທ່າແຮງ, ຖືວ່າພາກການລົງທຶນຖືວ່າຊິບໍ່ມີບັນຫາ, ພວກເຮົາກໍມີສິນຄ້າຫລາຍໆຢ່າງສົ່ງອອກແລ້ວດຽວນີ້, ແຕ່ວ່າພາກປະຊາຊົນພາກຄົວເຮືອນນີ້ ເປັນລາຍຮັບຂອງປະຊາຊົນນີ້ມັນບໍ່ທັນໄປ. ບັນຫາດັ່ງກ່າວມັນກໍຕິດພັນການແກ້ໄຂຄວາມທຸກຍາກຢູ່ໃນຊົນນະບົດນັ້ນຕື່ມ ແລະ ຢາກໃຫ້ລັດຖະບານເອົາໃຈໃສ່ ເພາະບັນຫາດັ່ງກ່າວຜ່ານມາລັດຖະບານເຮົາໄດ້ລົງທຶນຫລາຍໃດ໋, ບໍ່ແມ່ນວ່າເຮົາມາກຳນົດແຕ່ໃນວາລະແຫ່ງຊາດນີ້ ພັກ-ລັດໄດ້ລົງທຶນໃສ່ວຽກງານດັ່ງກ່າວນີ້ຫລາຍ. ການກໍ່ສ້າງໂຄງລ່າງພື້ນຖານ ເປັນເສັ້ນທາງ, ໄຟຟ້າ, ຊົນລະປະທານ ຫລືວ່າສູນສົ່ງເສີມການຜະລິດແຕ່ລະແຂວງລະເມືອງ ແຕ່ເປັນຫຍັງການຜະລິດຂອງພວກເຮົາຍັງບໍ່ທັນໄປ, ຍັງອາໄສປັດໄຈນຳເຂົ້າມາຈາກພາຍນອກມາ ແລະ ມັນເປັນສາເຫດໜຶ່ງຂອງເງິນເຟີ້ ອັນນີ້ແມ່ນສະເໜີລັດຖະບານ ຢາກໃຫ້ກວດຄືນບັນດາໂຄງລ່າງຕ່າງໆ ມັນຍັງມີປະສິດຕິພາບປະສິດຕິຜົນໃນການນຳໃຊ້ໃນລະດັບໃດ? ແລະ ກ່ອນເຮົາພວກສິໄປສູ່ການຜະລິດອັນໃໝ່ນີ້, ພວກເຮົາອັນເກົ່ານີ້ກໍຫລາຍແລ້ວ ເຮັດແຕ່ປົດປ່ອຍພຸ້ນມານໍ້ ອັນນີ້ແມ່ນຢາກໃຫ້ເບິ່ງຄືນ ເພາະວ່າຢາກໃຫ້ຍູ້ແຮງການຜະລິດພາຍໃນນີ້, ອັນໜຶ່ງພວກເຮົາຕ້ອງໄດ້ຊອກເຫັນທ່າແຮງ ແລະ ຂອດຈຳກັດຂອງການຜະລິດຄອບຄົວມັນເປັນຫຍັງຈຶ່ງບໍ່ໄປບໍ່ມາຜ່ານມານີ້ ທັງໆທີ່ພວກເຮົາມີທ່າແຮງຫລາຍໆດ້ານ ພັກ-ລັດກໍໄດ້ລົງທຶນຫລາຍຄືຂ້າພະເຈົ້າເວົ້າ.

ອັນທີສອງ ນີ້ແມ່ນພວກເຮົາມີດິນ, ມີນ້ຳ, ມີແຮງງານ ກໍມີຄວາມອຸດົມສົມບູນຕ່າງໆ ປະຊາຊົນລາວຈະຕ່າງຈາກປະເທດອື່ນ ແຕ່ວ່າຄວາມອຸດົມສົມຂອງພວກເຮົາຍັງຫລາຍຢູ່ໃນຊົນນະບົດ, ແຕ່ການຜະລິດດັ່ງກ່າວມັນບໍ່ໄປ ອັນນີ້ເຫັນວ່າ ພວກເຮົາທ່າແຮງບໍ່ທັນໄດ້ຖືກນຳໃຊ້ ຄັ້ນຊັ້ນຢາກໃຫ້ສຸມໃສ່ການນຳໃຊ້ທ່າແຮງນີ້ ແລະ ຂອດຈຳກັດຂອງປະຊາຊົນນີ້. ຜ່ານມາຊາວກະສິກອນຂອງພວກເຮົາແມ່ນຍັງຂາດທຶນຮອນໃນການຜະລິດແບບຄອບຄົວ ເວົ້າກັນຢູ່ກອງທຶນສົ່ງເສີມແຕ່ບໍ່ເຂົ້າເຖິງຊົນນະບົດຫ່າງໄກສອກຫລີກນີ້ ແລະ ຂາດຄວາມຮູ້ຄວາມສາມາດຄວາມເຂົ້າໃຈໃນຂະບວນການຜະລິດນີ້ ຖືວ່າໂຕນີ້ເຂົາຍັງບໍ່ທັນເຂົ້າໃຈ, ຍັງຜະລິດແບບເດີມໆຢູ່ວ່າຊັ້ນສາ, ເຮັດພໍໃຜພໍມັນ, ເຮັດຕາມມີຕາມເກີດຢູ່ ອັນນີ້ແມ່ນພວກເຮົາຕ້ອງໄດ້ຫັນໃສ່ເລັ່ງສົ່ງເສີມການຜະລິດນີ້ ແລະ ຂອດຕໍ່ມາສະເໜີລັດຖະບານຕ້ອງໄດ້ເລັ່ງສົ່ງເສີມອຸດສາຫະກຳຜະລິດປຸງແຕ່ງ ໂດຍຈະແມ່ນປະເພດອາຫານສັດ ຫລືວ່າຝຸ່ນຊີວະພາບ, ຝຸ່ນບົ່ມຕ່າງໆ ເພື່ອຫລຸດຜ່ອນການນຳເຂົ້າຝຸ່ນເຄມີ ເພາະຫລາຍປະເທດເຂົາກໍຢາກຫລຸດແລ້ວ, ໃຊ້ທ່າແຮງຂອງທ້ອງຖິ່ນນີ້ເປັນຫລັກ, ຕ້ອງໄດ້ສຸມໃສການກວດກາຄຸນນະພາບອາຫານສັດທີ່ນຳເຂົ້າ ຫລືວ່າຝຸ່ນເຄມີທີ່ນຳເຂົ້ານີ້ຕື່ມ. ບັນຫາດັ່ງກ່າວນີ້ ລາຍງານມື້ ກ່ອນກະວ່າເຮັດມີຄວາມຫຍຸ້ງຍາກ ຕ້ອງໄດ້ລົງທຶນກວດກາ ເພາະວ່າເຮົາໃຊ້ຂອງເຂົາເຮົາບໍ່ຮູ້ວ່າເຮົາໃຊ້ໄດ້ເຕັມປະສິດຕິພາບສ່ຳໃດ ອັນນີ້ຕ້ອງໄດ້ ເພື່ອບໍ່ເປັນການເອົາປຽບກັນ ຂ້າພະເຈົ້າຢາກສະເໜີຄືແນວນັ້ນ ຕໍ່ບັນຫາການປ່ອຍສິນເຊື່ອ MSME ນີ້ ໃຫ້ທາງຫົວໜ່ວຍຄອບຄົວນີ້ ໃຫ້ປະຊາຊົນໄດ້ເຂົ້າເຖິງແຫລ່ງທຶນ ແລະ ສົ່ງເສີມຄວາມຮູ້ການຜະລິດຂອງຊາວກະສິກອນ ແລະ ການສົ່ງເສີມການຕະຫລາດຂອງເຂົາເຈົ້າຕ້ອງໄດ້ເຮັດ ເຮັດຄວບຄູ່ກັນໄປຢ່າງຕໍ່ເນື່ອງ. ຜູ້ແທນຫລາຍຄົນກໍໄດ້ມີຄວາມເຫັນໄປແລ້ວ ແລະ ຄຽງຄູ່ກັບການສົ່ງເສີມນີ້ ກໍຢາກສະເໜີໃຫ້ຂຶ້ນບັນຊີສິນຄ້ານຳເຂົ້ານີ້ ອັນໃດສາມາດນຳເຂົ້າໄດ້, ອັນໃດພວກເຮົາຜະລິດພາຍໃນທີ່ສາມາດກຸ້ມກິນໄດ້ແລ້ວ ກໍຢາກໃຫ້ຈຳກັດການນຳເຂົ້າ ເພື່ອສົ່ງເສີມພາຍໃນ, ຢາກໃຫ້ກວດຄືນເພາະບໍ່ທັນມີຈະແຈ້ງເລື່ອງສິນຄ້ານຳເຂົ້າວ່າອັນໃດເຮົາກຸ້ມ, ອັນໃດເຮົາບໍ່ກຸ້ມ ອັນນີ້ແມ່ນຢາກໃຫ້ເຮັດຄວບຄູ່ກັນໄປ.

ບັນຫາສຸດທ້າຍ ແມ່ນເລື່ອງການຂຶ້ນໃບສຳມະໂນຕາດິນນີ້. ຫລາຍທ່ານກໍໄດ້ມີຄຳເຫັນໄປແລ້ວ ແຜນກໍມີ ແຜນປີ 2022 ກໍບໍ່ສາມາດຈັດຕັ້ງປະຕິບັດໄດ້ 2023 ນີ້ກໍຂຶ້ນຫລາຍກ່ວາເກົ່າ ອັນນີ້ຫລາຍທ່ານກໍມີຄວາມເຫັນ, ຂ້າພະເຈົ້າຊິເວົ້າເລື່ອງສາເຫດທີ່ເຫັນຢູ່ທ້ອງຖິ່ນນີ້ ສາເຫດປະຕິບັດບໍ່ໄດ້ນີ້ແມ່ນສ່ວນທີ່ເຫລືອຢູ່ໃນແຜນນີ້ບໍ່ເປັນແຜນສະເລ່ຍ ແລະ ແມ່ນມັນເຫລືອແຕ່ເຂດຫຍຸ້ງຍາກ ເຂດຫ່າງໄກສອກຫລີກ ເຂດຊົນນະບົດ, ມັນບໍ່ງ່າຍຄືເຮົາເຮັດໃນເຂດຕົວເມືອງ ມັນຈະເຮັດງ່າຍປະຊາຊົນເຂົາຕື່ນໂຕແລ້ວ, ສ່ວນຊົນນະບົດເພິ່ນບໍ່ຢາກເອົາໃຈໃສ່ປານໃດໃນການຂຶ້ນທະບຽນທີ່ດິນ ເພາະເພິ່ນບໍ່ເຄີຍເດ, ປະໂຫຍດທີ່ເພິ່ນຈະໄດ້ຮັບເພິ່ນກະບໍ່ເຂົ້າໃຈ ເລື່ອງສິໄປຊື້ໄປຂາຍໄປແລກໄປປ່ຽນຫຍັງກັບທະນາຄານ ເຂົາເຈົ້າກະບໍ່ສົນໃຈ ອັນນີ້ບາງເທື່ອເຮົາອາດຈະແນມເຫັນ, ແຕ່ວ່າການປະຕິບັດໂຕຈິງ ເຂົາບໍ່ໃຫ້ການຮ່ວມມືວ່າຊັ້ນຊາ ອັນນີ້ຊິແກ້ແນວໃດ ເຮົາຍັງຊິຖືແຜນເກົ່ານີ້ວ່າ, ສິສູ້ຊົນປະຕິບັດນິກະລອງໆຄິດເບິ່ງວ່າແຜນນີ້ຖ້າມັນປະຕິບັດບໍ່ໄດ້ ມັນຫລຸດຫລື່ນກັນຫລາຍນິນະ, ແຜນມັນກະບໍ່ຢາກສັກສິດປານໃດ ອັນນີ້ແມ່ນຢາກໃຫ້ພິຈາລະນາຄືແນວນັ້ນ ແລະ ຕໍ່ມາບົດສະຫລຸບຂອງກະຊວງການເງິນ ກະຮຽກຮ້ອງໃຫ້ມີການຂຶ້ນໃບທະບຽນຕາດິນສົມບູນໃຫ້ໄວ ແລະ ສຳເລັດການກຳນົດລາຄາທີ່ດິນແບບເປັນເຂດໃຫ້ສຳເລັດ ເພາະໂຕນີ້ມັນຕິດພັນກັບການສ້າງຖານລາຍຮັບການຂຶ້ນທະບຽນຕາດິນກັບການກຳນົດລາຄາ ເພາະວ່າມັນຈະເປັນຖານລາຍຮັບໜຶ່ງທີ່ຈະໄດ້ເກັບຈາກການໂອນກຳມະ ສິດຊື້-ຂາຍດິນ ໂອນກຳມະສິດທີ່ດິນ ເພາະຜ່ານມາລາຍຮັບສ່ວນນີ້ເປັນລາຍຮັບຫລາຍ, ການໂອນສິດຂອງເຂົາເຈົ້າ ພວກເຮົາບໍ່ໄດ້ຫຍັງເລີຍ ໂອນສິດຈາກຜູ້ໜຶ່ງໄປຫາຜູ້ໜຶ່ງ ດິນຕອນດຽວ 3-4 ເທື່ອໂອນ ລັດກະບໍ່ໄດ້ຫຍັງ, ບາງເທື່ອກໍມີແຕ່ນາຍບ້ານຢັ້ງຢືນໃຫ້ເລັກໆນ້ອຍໆ ອັນນີ້ຂ້າພະເຈົ້າຢາກມີຄຳເຫັນຄືແນວນັ້ນ ຄຳເຫັນຂ້າພະເຈົ້າມີພຽງນັ້ນ.




# ປີໃໝ່ປ່ຽນແປງຫຍັງໃໝ່

ໂດຍ: ດົ້ນກົບເມກ



ວັນທີ 1 ມັງກອນ 2023 ເປັນມື້ທຳອິດຂອງປີໃໝ່ສາກົນ ຖືກຳນົດເອົາ ເຊິ່ງສິ່ງທີ່ມັນແຕກຕ່າງຄືງມີແຕ່ພຽງເງື່ອນໄຂຂອງການເວລາ ແຕ່ທ່າອ່ຽງການດຳລົງຊີວິດ ແລະ ເສດຖະກິດຄືງຈະຝືດເຄືອງຄືເກົ່າ ຖ້າວ່າເສດຖະກິດບໍ່ຟື້ນຕົວ ຫລື ຟື້ນຕົວໄດ້ຊ້າ ດັ່ງນັ້ນ ປີໃໝ່ 2023 ຄືງຈະໃໝ່ແຕ່ການເວລາທີ່ມັນໝູນວຽນເຮັດໜ້າທີ່ຂອງມັນເປັນປົກກະຕິ ຄົນເຮົາກໍເຊັ່ນດຽວກັນ ຕ້ອງໄດ້ເຮັດໜ້າທີ່ຄືເກົ່າ ແຕ່ຕ້ອງໄດ້ປ່ຽນວິທີເຮັດ.

ປີໃໝ່ ໜ້າທີ່ເກົ່າ ຫລື ໃໝ່ ອາດສຳຄັນ ແຕ່ການໃຊ້ຊີວິດໃຫ້ຢູ່ລອດຈາກບັນຫາເສດຖະກິດຝືດເຄືອງນັ້ນ ອາດມີຄວາມສຳຄັນກວ່າ, ສະພາບເສດຖະກິດເຂົ້າຍາກໝາກແພງມັນຮຽກຮ້ອງໃຫ້ຄິດກ່ອນຈ່າຍ, ບໍ່ຈ່າຍພຽງເພື່ອຮັກສາໜ້າ, ເຫັນຊ້າງຂີ້ຕາມຊ້າງ... ຄຳເວົ້າເຫລົ່ານີ້ ຕ້ອງໄດ້ຫັນມາເຕືອນສະຕິ, ນົກນ້ອຍສ້າງຮັງໃຫ້ເໝາະສົມກັບຕົວເອງ ບໍ່ດັ່ງນັ້ນຈະເປັນທາດຂອງວັດຖຸ, ຜູ້ຂຽນໄດ້ນັ່ງຟັງຄູ່ສົນທະນາທ່ານໜຶ່ງເລົ່າສູ່ຟັງ ຂະນະນັ່ງກິນກາເຟວ່າ: ລາວມີໝູ່ບາງຄົນທີ່ມີເຮືອນຫລັງໃຫຍ່, ຄອບຄົວລູກເມຍອົບອຸ່ນສົມບູນ, ມີລົດຄັນງາມຂີ່ແຕ່ເສຍຢ່າງດຽວຍັງໜັກໃຈ ເພາະເປັນໜີ້ທະນາຄານ! ດັ່ງນັ້ນ ຄົນເຮົາຈຶ່ງບໍ່ອາດສາມາດເອົາວັດຖຸທີ່ເຫັນດ້ວຍຕາມາຕັດສິນສະເໝີໄປວ່າ ຄົນທີ່ມີເຮືອນງາມຢູ່-ຂີ່ລົດຫລູຫລາແລ້ວຈະມີຄວາມສຸກແທ້ຈິງ ເພາະໜີ້ຖ້ວມຫົວຢູ່.

ພະພຸດທະເຈົ້າສາສະດາຂອງສາສະໜາພຸດ ສອນວ່າ ການເປັນໜີ້ເປັນທຸກທີ່ສຸດໃນໂລກ, ບຸກຄົນໃດເປັນໜີ້ສິນທັງຢືມເງິນໝູ່ພວກ; ທະນາຄານຕ່າງໆ ຍ່ອມເກີດຄວາມທຸກໜີບໍ່ມື້ມ ເພາະຜ່ານມາເຫັນວ່າ ບາງກໍລະນີຖືກທະນາຄານມາຍຶດເອົາຊັບສິນຄືນກໍມີ ດັ່ງນັ້ນ ການໃຊ້ຊີວິດສຳລັບປີໃໝ່ 2023 ຜູ້ຂຽນຄິດວ່າຍິ່ງຕ້ອງໄດ້ລະວັງການໃຊ້ຈ່າຍປະຄັບປະຄອງບໍ່ໃຫ້ຊີວິດລຳບາກເປັນໜີ້ຖ້ວມຫົວ.

ປີໃໝ່ 2023 ຈະມາເຖິງນີ້ ສິ່ງທີ່ຄວນພັດທະນາໃຫ້ຫລາຍຂຶ້ນຄືສະຕິປັນຍາ ເພື່ອແກ້ໄຂບັນຫາຊີວິດເສດຖະກິດຝືດເຄືອງ, ທ່ານຜູ້ອ່ານຢ່າລືມວ່າ ສຸພາສິດຊາວພຸດສອນໄວ້ດີແລ້ວວ່າ ຕົນເປັນທີ່ເພິ່ງແຫ່ງຕົນ, ເບິ່ງຄົນອື່ນໄດ້ບາງຄັ້ງຄາວ ແຕ່ໃຜກໍຕາມທີ່ສ້າງຕົວເຂັ້ມແຂງເປັນທີ່ເພິ່ງຂອງຕົນເອງໄດ້ ຜູ້ນັ້ນຊື່ວ່າເປັນຜູ້ມີທີ່ເພິ່ງອັນປະເສີດ.



## ສຸກສະບາຍຫາຍໂລດ

# 8 ເວລາທີ່ຄວນດື່ມນໍ້າ ເພື່ອຊ່ວຍຫລຸດໄຂມັນ-ເພີ່ມພູມຕ້ານທານ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



**1. ຫລັງຈາກຕື່ນນອນ**

ຫລັງຈາກທີ່ຮ່າງກາຍບໍ່ໄດ້ດື່ມນໍ້າພຽງພໍເລີຍ ໃນເວລານອນເປັນເວລາເກືອບ 6-8 ຊົ່ວໂມງ (ເວລານອນປົກກະຕິ), ຄວນດື່ມນໍ້າທັນທີຫລັງຕື່ນນອນ ເພື່ອເຮັດໃຫ້ຮ່າງກາຍສົດຊື່ນ, ຕື່ນໂຕ, ຫລຸດອາການວິນຫົວ, ມຶນໆ, ງົງໆ ຍ້ອນຂາດນໍ້າເປັນເວລາດົນ ດັ່ງນັ້ນ, ຫລັງຈາກຕື່ນນອນຄວນດື່ມຢ່າງໜ້ອຍ 1 ຈອກ (200 ຊີຊີ) ເພື່ອເພີ່ມນໍ້າ ແລະ ເຮັດໃຫ້ຮ່າງກາຍສົດຊື່ນ.

ຄຳແນະນຳສຳລັບການດື່ມນໍ້າຫລັງຈາກຕື່ນນອນ ຄວນດື່ມນໍ້າທັນທີຫລັງຈາກຕື່ນນອນໂດຍບໍ່ຕ້ອງຖູແຂ້ວ ເພາະເຊື້ອແບັກທີເລຍໃນປາກທີ່ເຮົາດື່ມໄປພ້ອມກັບນໍ້າ ຈະຊ່ວຍໃຫ້ການເຮັດວຽກຂອງລະບົບຍ່ອຍອາຫານດີຂຶ້ນເຊັ່ນດຽວກັນ.

**2. ໃນລະຫວ່າງ ຫລື ຫລັງຈາກການອອກກຳລັງກາຍ**

ການອອກກຳລັງກາຍເຮັດໃຫ້ຮ່າງກາຍສູນເສຍນໍ້າ ຜ່ານທາງເຫື່ອຫລາຍກວ່າປົກກະຕິ ດັ່ງນັ້ນ, ຮ່າງກາຍບໍ່ຄວນຂາດນໍ້າ ທັງໃນເວລາທີ່ອອກກຳລັງກາຍ ຫລື ຫລັງຈາກອອກກຳລັງກາຍ ຄວນດື່ມນໍ້າເລັກນ້ອຍໃນລະຫວ່າງການອອກກຳລັງກາຍເປັນປະຈຳ ຢ່າປ່ອຍໃຫ້ຮ່າງກາຍຂາດນໍ້າຕະຫລອດການອອກກຳລັງກາຍ ແຕ່ທ່ານບໍ່ຄວນດື່ມນໍ້າຈອກໃຫຍ່ ຫລື ກືນໝົດຕຸກໃນບາດດຽວ ເນື່ອງຈາກວ່າ ມັນສາມາດເຮັດໃຫ້ເກີດອາການເຈັບສຽບໄດ້. ການດື່ມນໍ້າໃນລະຫວ່າງການອອກກຳລັງກາຍ ນອກຈາກຊ່ວຍປັບປຸງປະສິດທິພາບການອອກກຳລັງກາຍດີຂຶ້ນແລ້ວ ຍັງຊ່ວຍຫລຸດຜ່ອນຄວາມສ່ຽງຕໍ່ການເກີດອາການວິນຫົວ ແລະ ໜ້າມືດ ໃນລະຫວ່າງການອອກກຳລັງກາຍໄດ້ເຊັ່ນດຽວກັນ.

**3. ກ່ອນກິນອາຫານ**

ດື່ມນໍ້າກ່ອນອາຫານ 30 ນາທີ ຈະຊ່ວຍກະຕຸ້ນໃຫ້ຮ່າງກາຍຮູ້ວ່າກຳລັງຈະເລີ່ມກິນອາຫານ ເພື່ອເຮັດໃຫ້ລະບົບຍ່ອຍອາຫານພ້ອມທີ່ຈະເຮັດວຽກຢ່າງມີປະສິດທິພາບ ນອກນັ້ນ, ການດື່ມນໍ້າກ່ອນກິນອາຫານຍັງສາມາດເຮັດໃຫ້ເຮົາຮູ້ສຶກອີ່ມໄວ, ມີຄວາມຢາກອາຫານນ້ອຍລົງ ສະນັ້ນ, ຈຶ່ງເປັນວິທີທີ່ດີສຳລັບຜູ້ທີ່ກຳລັງຫລຸດນໍ້າໜັກ ແຕ່ບໍ່ຄວນດື່ມນໍ້າຫລາຍກ່ອນທີ່ຈະກິນອາຫານ ເພາະອາດຈະເຮັດໃຫ້ເກີດອາການເຈັບສຽບກະເຈັບ.

**4. ກ່ອນທີ່ຈະອາບນໍ້າ**

ການດື່ມນໍ້າກ່ອນອາບນໍ້າ ເໝາະສຳລັບຄົນທີ່ມັກອາບນໍ້າອຸ່ນ ເນື່ອງຈາກການອາບນໍ້າອຸ່ນຈະເຮັດໃຫ້ເລືອດໄຫລຜ່ານຜິວໜັງເພີ່ມຂຶ້ນ ແລະ ເລືອດທີ່ສົ່ງໄປສະໝອງໜ້ອຍລົງ ແລະ ອາດຈະມີຄວາມສ່ຽງຕໍ່ການເປັນວິນ ຫລື ໜ້າມືດຈາກຄວາມດັນເລືອດຕໍ່າໄດ້ ເຊິ່ງອັນຕະລາຍຫລາຍ ການດື່ມນໍ້າໜຶ່ງ ຫລື ສອງຈອກກ່ອນທີ່ຈະອາບນໍ້າ ສາມາດຊ່ວຍຫລຸດຄວາມສ່ຽງຄວາມດັນຫລຸດລົງໃນເວລາອາບນໍ້າອຸ່ນ ເພື່ອປ້ອງກັນບໍ່ໃຫ້ເກີດອາການມືດໃນເວລາອາບນໍ້າ.

**5. ກ່ອນຈະໄປນອນ**

ການດື່ມນໍ້າກ່ອນນອນ ສາມາດຫລຸດຄວາມສ່ຽງການຂາດນໍ້າໃນເວລານອນ ແຕ່ກ່ອນເຂົ້ານອນບໍ່ຄວນດື່ມນໍ້າຫລາຍ ເພາະອາດຈະໄປລົບກວນຮ່າງກາຍທີ່ຕ້ອງລຸກຂຶ້ນໄປຖ່າຍເບົາໃນເວລານອນເລື້ອຍໆ ດັ່ງນັ້ນ ເຮົາຄວນດື່ມກ່ອນເຂົ້ານອນບໍ່ເກີນ 1 ຈອກ ຫລື ຖ້າດື່ມນໍ້າພຽງ 1 ຈອກ ແລ້ວຍັງເຮັດໃຫ້ເຮົາລຸກຂຶ້ນຍ່ຽວກາງຄືນ ແນະນຳໃຫ້ດື່ມພຽງແຕ່ເຄິ່ງຈອກ.

**6. ເມື່ອຮູ້ສຶກບໍ່ສະບາຍ, ມີອາການໄຂ້**

ໃນຊ່ວງເວລາທີ່ເປັນໄຂ້, ບໍ່ສະບາຍ, ອຸນຫະພູມຮ່າງກາຍຈະສູງຂຶ້ນ ການດື່ມນໍ້າຊ່ວຍຫລຸດອຸນຫະພູມຮ່າງກາຍ ແລະ ຂັບໄລ່ຄວາມຮ້ອນອອກທາງປັດສະວະ ເຮັດໃຫ້ອາການໄຂ້ຫາຍໄວ ແລະ ຍັງຊ່ວຍໃຫ້ລະບົບພູມຕ້ານທານຂອງຮ່າງກາຍເຮັດວຽກໄດ້ດີຂຶ້ນ; ແຕ່ທ່ານບໍ່ຄວນດື່ມນໍ້າທັງໝົດເທື່ອດຽວ ຄວນດື່ມເທື່ອລະນ້ອຍ ແລະ ຫລາຍເທື່ອ.

7. ຮູ້ສຶກເມື່ອຍ

ຖ້າຮູ້ສຶກອ່ອນເພຍ, ເມື່ອຍ, ເບື່ອ ແລະ ໂມໂຫງ່າຍ ອາດຈະເປັນສັນຍານຂອງອາການຂາດນໍ້າ ສະນັ້ນ, ການດື່ມນໍ້າ 1 ຈອກ ສາມາດຊ່ວຍຫລຸດອາການເຫລົ່ານີ້ໄດ້ ໂດຍການດື່ມນໍ້າໃຫ້ພຽງພໍກັບຄວາມຕ້ອງການຂອງຮ່າງກາຍໃນແຕ່ລະມື້ເປັນປະຈຳ ເພື່ອປ້ອງກັນບໍ່ໃຫ້ຮ່າງກາຍເຂົ້າສູ່ພາວະຂາດນໍ້າ ຄວນດື່ມນໍ້າປະມານ 2-3 ລິດ ແລະ ບໍ່ຄວນດື່ມນໍ້າໃນປະລິມານຫລາຍໃນຄັ້ງດຽວ, ຄວນກິນຊ້າໆ ແລະ ດື່ມເລື້ອຍໆຕະຫລອດມື້.

8. ເມື່ອເບິ່ງແຍງຄົນເຈັບ ຫລື ຕ້ອງຢູ່ໃນພື້ນທີ່ທີ່ເຕັມໄປດ້ວຍຄົນເຈັບບໍ່ເຊື່ອຕ້ອງເຊື່ອ ການດື່ມນໍ້າຊ່ວຍປົກປ້ອງຮ່າງກາຍ ຈາກການຕິດເຊື້ອຈາກຄົນເຈັບທີ່ຢູ່ອ້ອມຂ້າງ ເນື່ອງຈາກການດື່ມນໍ້າຊ່ວຍສົ່ງເສີມການເຮັດວຽກຂອງລະບົບພູມຕ້ານທານ. ນອກນັ້ນ, ການດື່ມນໍ້າເລື້ອຍໆ ໃນເວລາທີ່ຢູ່ກັບຄົນເຈັບ ຍັງຊ່ວຍຫລຸດຄວາມກົດດັນ ແລະ ຄວາມອິດເມື່ອຍຈາກການດູແລຄົນເຈັບເຊັ່ນກັນ.

## ສາລາກະວີ

# ປີໃໝ່ສາກົນ

# ໂດຍ: ໄມ ແສງມະນີ

⁕ ປີເກົ່າຫຍັບຍ່າງຍ້າຍ
ປວງປະຊາຊົນລາວ
ແສນສຸກໃຈໂຮຮ້ອງ
ຄຶກຄື້ນໄປທົ່ວລ້າ

ປີໃໝ່ວຽນມາ
ທົ່ວເໜືອກາງໃຕ້
ສະຫລອງກັນມ່ວນຊື່ນ
ປະຊາຊ້ອຍຊື່ນບານ

⁕ ວັນນີ້ທົ່ວເຂດແຄ້ນ
ໃຜກໍແສນສຸກສັນ
ປີໃໝ່ສາກົນເຂົ້າ
ພົບຈອດຂວບອີກຄັ້ງ

ແດນຕ່າງທາງໄກ
ພໍ່າກັນພຽງພ້ອມ
ມາເຢືອນຢາມຮອດ
ສະຫລອງຕ້ອນຮັບເອົາ ທ່ານເອີຍ!

⁕ ສາທຸເນີ! ປີໃໝ່ນີ້
ຂໍໃຫ້ຫລາຍຄົນມີ
ເງິນຄຳທອງຂອງໃຊ້
ສຸກສົມຫວັງມ່ວນແມ້ງ

ຂໍອ່ວຍພອນໄຊ
ເຫື່ອແຮງຫັນຫ້າວ
ໄຫລມາແໜ້ນອັ່ງ
ລວຍລົ້ນຮັ່ງມີ

⁕ ສຸກຂີສົມມາດມຸ້ງ
ຊົບຊີວາຍືນຍາວ
ເຖົ້າທີ່ຄົນຂານເວົ້າ
ອາຍຸຍືນລື່ນລົ້ນ

ພະໄມຄິດປອງໝາຍ
ດັ່ງດຽວໂດຍດ້າມ
ພົນວັດສາຂວບຮອດ
ຄົນເວົ້າຊ່າລື

⁕ ແບມືມາໃຫ້ທ່ານໄດ້
ລວຍຊັບສິນຖວາຍທານ
ຢ່າໄດ້ໝອງມົວເສົ້າ
ມີພະລັງແກ່ນເຂັ້ມ

ບາຍນັບເງິນຄຳ
ຊື່ສຽງໄກກ້ອງ
ໂສກາອຸກອັ່ງ
ສະເໜີຊ້າງຄູ່ເມືອງ ທ່ານເອີຍ!



## ສະຫາຍຮ່ວມຂໍ

# ໂດຍ: ປ່າວກະປື

ຄົນຂໍທານ ເຄາະປະຕູເຮືອນຈານເຈີດ ແລະ ເວົ້າອອກມາວ່າ: "ຂໍເງິນແດ່ທ້ອນ"

**ເຈີດ:** "ຂ້ອຍບໍ່ມີເງິນ"
**ຂໍທານ:** "ຊັ້ນ... ອາຫານກໍ່ໄດ້"
**ເຈີດ:** "ຂ້ອຍບໍ່ມີອາຫານເຫລືອ"
**ຂໍທານ:** "ຊັ້ນ ຂ້ານ້ອຍຂໍເສື້ອ ຫລື ໂສ້ງເກົ່າກໍ່ໄດ້"
**ເຈີດ:** "ເສື້ອ-ໂສ້ງ, ເກົ່າ ຫລື ໃໝ່ ຂ້ອຍກໍ່ບໍ່ມີ"
**ຂໍທານ:** "ຖ້າເປັນແນວນັ້ນ... ທ່ານຕ້ອງມາກັບຂ້ານ້ອຍ ແລ້ວພາກັນໄປຂໍທານນຳກັນເທາະ"

## COMRADES IN ALMS

# By: BAOKBU

A beggar knocked at Chan Chert's door and said, "Please give me some money"

**Chert:** "I have no money"
**Beggar:** "You can give me some food"
**Chert:** "There is no food left"
**Beggar:** "Thengivemeanoldshirtorpants"
**Chert:** "I have no shirt no pants-old or new".
"In that case," said the beggar, "You must come with me and we can go begging together".

## ການອອກ...

ພວກເຮົາກໍເຫັນວ່າ ເພື່ອປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນທັນແມ່ນພວກເຮົາຈະສືບຕໍ່ໃນການສຳຫລວດ, ວັດແທກ, ເກັບກຳຂໍ້ມູນຕົວຈິງຕື່ມ ແລະ ຈະສະເໜີ. ດຽວນີ້ແມ່ນຂໍ້ມູນໃນການລົງໄປເກັບກຳ ຫລື ເຮັດທົດລອງ ແມ່ນໄດ້ສັງລວມທັງໝົດ, ໄດ້ມີການເອກະພາບກັນໃນສອງກະຊວງນີ້ ເພື່ອສະເໜີລັດຖະບານພິຈາລະນາໃນການສະເໜີຕໍ່ສະພາແຫ່ງຊາດໃນການດັດແກ້ກົດໝາຍມາດຕາ 14 ກົດໝາຍວ່າດ້ວຍທີ່ດິນນັ້ນ ເຊິ່ງໄດ້ກຳນົດໃນການຮັບຮູ້ໃນການອອກໃບສິດນຳໃຊ້ທີ່ດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ, ແຕ່ບໍ່ແມ່ນໃບຕາດິນ. ໃນຄວາມຕ້ອງການຂອງປະຊາຊົນແມ່ນຢາກໄດ້ໃບຕາດິນ ຊຶ່ງອັນນີ້ພວກເຮົາຈຶ່ງວ່າເພື່ອຈະສາມາດອອກໃບຕາດິນໄດ້ມັນຕ້ອງໄດ້ດັດແກ້ມາດຕາດັ່ງກ່າວນັ້ນຕື່ມ ແລະ ພ້ອມກັນນັ້ນຄຽງຄູ່ກັນກັບການສະເໜີດັດແກ້ກົດໝາຍນັ້ນ ທາງເບື້ອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງກະສິກຳ ແລະ ປ່າໄມ້ ສະເໜີວ່າພວກເຮົາຄວນຈະຮັບຮູ້ສິດຂອງປະຊາຊົນທີ່ຢູ່ໃນປ່າ 3 ປະເພດປ່ານີ້ໄດ້ດຳລົງຊີວິດມາກ່ອນ ແລະ ຈັດສັນທີ່ດິນຄືນໃໝ່ເຂດທີ່ວ່າເປັນປ່າສາມາດເປັນດິນປ່າໄມ້ເນາະ ກໍມີຈຳນວນໜຶ່ງທີ່ເປັນດິນປ່າໄມ້ບ້ານ, ປ່າໄມ້ເມືອງ ຫລື ປ່າໄມ້ແຂວງຄຸ້ມຄອງ ທີ່ສາມາດທົດແທນເນື້ອທີ່ດິນດັ່ງກ່າວນີ້ເພື່ອຈະສາມາດໄດ້ເນື້ອທີ່ດິນ 70% ຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ອັນນີ້ກໍແມ່ນແຜນການໜຶ່ງທີ່ພວກເຮົາຈະສືບຕໍ່ຈັດຕັ້ງປະຕິບັດ. ສ່ວນດິນທີ່ບໍ່ມີເງື່ອນໄຂນັ້ນແມ່ນພວກເຮົາຈະສະເໜີຕັດອອກ. ອັນນັ້ນແມ່ນຄຳຖາມຂໍ້ທີໜຶ່ງ ກ່ຽວກັບດິນປ່າໄມ້.

**ຂໍ້ທີສອງ** ກ່ຽວກັບການຊົດເຊີຍຜົນກະທົບທາງລົດໄຟນີ້ ກໍແມ່ນບໍ່ໄດ້ຕິດພັນໂດຍກົງກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແຕ່ວ່າພວກເຮົາກະນອນໃນສ່ວນໜຶ່ງທີ່ໄດ້ຮັບຜິດຊອບໃນວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ຕິດຕາມການຊົດເຊີຍທັນສຳລັບໂຄງການລົດໄຟນີ້ກະແມ່ນທ່ານລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ກໍໄດ້ຕອບໄປແລ້ວ ແລະ ທາງເບື້ອງກະຊວງກະສິກຳກໍໄດ້ຕອບໄປມື້ເຊົ້ານີ້, ຄັນຊັ້ນ ບັນຫາໃນການຊົດເຊີຍຜົນກະທົບນີ້ໃນດຳລັດ 84 ແມ່ນພວກເຮົາໄດ້ກຳນົດໃຫ້ສ້າງຕັ້ງຄະນະກຳມະການຊົດເຊີຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຢູ່ໃນຂັ້ນແຂວງ ຊິແມ່ນເຈົ້າແຂວງເປັນປະທານໂດຍກົງໃນການຊົດເຊີຍ. ບັນຫາອັນທີ 1: ຫລັກໆທີ່ພວກເຮົາພົບເຫັນ 1) ອັດຕາການຊົດເຊີຍ; 2) ງົບປະມານໃນການຊົດເຊີຍ ກະມີຕ່ອງໂສ້ກັນໃນການຊົດເຊີຍ. ຕົວຢ່າງ: ໂຄງການຊົດເຊີຍໄຟຟ້າ ເວລາລົງໄປກວດກາເຫັນຕົວຈິງທັນ ບໍລິສັດບໍ່ສາມາດສະໜອງງົບປະມານໃຫ້ກັບພາກລັດໃນການຊົດເຊີຍໄດ້ທັນເວລາເຮັດໃຫ້ການຊົດເຊີຍຊັກຊ້າ ຫລືວ່າພັກ-ລັດເຮົາ ບໍ່ສາມາດສະໜອງ ອັນນີ້ກະຂໍໂທດເບື້ອງໄຟຟ້າຢູ່ນີ້. ຕົວຢ່າງ: ໂຄງການໄຟຟ້າ ຂາຍໄຟຟ້າແຕ່ເຮົາບໍ່ສາມາດສະໜອງງົບປະມານຈາກການຂາຍໄຟຟ້າໃຫ້ໄດ້ ບໍລິສັດກະເປັນອັນບ່ອນອີງໃນການຕໍ່ລອງວ່າບໍ່ມີງົບປະມານໃນການຊົດເຊີຍ ຫລື ຟື້ນຟູຊີວິດການເປັນຢູ່ ຄັນຊັ້ນມັນກໍເປັນຕ່ອງໂສ້ກັນເຮັດໃຫ້ອັນໜຶ່ງພວກເຮົາບໍ່ສຳເລັດໃນການຊົດເຊີຍຫັ້ນ. ອັນທີ 2: ມານີ້ເນາະໃນກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ກໍແມ່ນກຳນົດພາລະບົດບາດອີກວ່າ ຄະນະຊີ້ນຳໂຄງການຈະແມ່ນກະຊວງກະສິກຳ ແລະ ເບື້ອງພະແນກກະສິກຳຢູ່ຂັ້ນແຂວງ, ພວກເຮົາໄດ້ສົມທົບກັນກຳລັງປັບປຸງດຳລັດ 84 ເພື່ອໃຫ້ມັນສອດຄ່ອງກັບກົດໝາຍຫັ້ນ, ແຕ່ວ່າໃນການຈັດຕັ້ງປະຕິບັດຕົວຈິງພວກເຮົາຈະເຮັດແນວໃດໃຫ້ມັນສາມາດຈັດຕັ້ງປະຕິບັດໄດ້ຢ່າງສອດຄ່ອງຫັ້ນ.

**ຄຳຖາມທີສາມ** ກ່ຽວກັບການອະນຸມັດໂຄງການລົງທຶນ ຢາກໃຫ້ສຶກສາເບິ່ງພື້ນທີ່ຕົວຈິງຄັກແນ່ ໃຫ້ມີຂໍ້ມູນໂດຍສະເພາະເຂດທຳການຜະລິດຂອງປະຊາຊົນ, ເຂດທຳມາຫາກິນຂອງເຂົາເຈົ້າ ຜ່ານມາກໍເຄີຍມີການອະນຸມັດ ແລະ ມາຊອກເນື້ອທີ່ຕາມຫລັງ. ອັນນີ້ກໍເຫັນດີເປັນເອກະພາບນຳທ່ານຜູ້ແທນທີ່ໄດ້ຍົກຂຶ້ນກໍໄດ້ມີຫລາຍໂຄງການທີ່ພວກເຮົາອະນຸມັດໂຕເລກ ແລ້ວໄປຊອກຫາເນື້ອທີ່ດິນຕາມຫລັງແຕ່ບໍ່ໄດ້ຈັດສັນຫລື ມີໂຄງການຊໍ້າຊ້ອນ ກະແມ່ນເຫດຜົນໜຶ່ງທີ່ເກີດຂຶ້ນ. ຈາກບັນຫາດັ່ງກ່າວເບື້ອງລັດຖະບານຈະສືບຕໍ່ໃນການແກ້ໄຂບັນຫາດັ່ງກ່າວ.

**ອັນທີສີ່** ການອອກໃບຕາດິນ. ອັນນີ້ກໍເປັນບັນຫາທີ່ໄດ້ລາຍງານຫລາຍຄັ້ງ ກ່ຽວກັບການກຳນົດຄາດໝາຍ 300.000 ຕອນ ໃນປີ 2022 ແລະ 400.000 ຕອນ ໃນປີ 2023. 2022 ພວກເຮົາສຳເລັດແຕ່ 100.000 ກວ່າຕອນ ຖືວ່າພວກເຮົາບໍ່ໄດ້ບັນລຸ ໄດ້ 30 ກວ່າເປີເຊັນ, ລະມາປີ 2023 ພວກເຮົາກຳນົດ 400.000 ຕອນ ພວກເຮົາກໍໄດ້ລົມກັນຢູ່ພາຍໃນເບື້ອງລັດຖະບານ ແລະ ກອງປະຊຸມຄະນະປະຈຳກໍໄດ້ມີການຊີ້ແຈງຈຳນວນໜຶ່ງ. ເຫດຜົນເປັນຫຍັງທີ່ພວກເຮົາຈຶ່ງເອົາຕົວເລກດັ່ງກ່າວນີ້ ຄາດໝາຍຂອງພວກເຮົາລະແມ່ນປີ 2025 ພວກເຮົາຢາກໃຫ້ສຳເລັດທັງໝົດ ການຮັບຮູ້ສິດຂອງປະຊາຊົນໃນການອອກໃບຕາດິນ ໝາຍຄວາມວ່າ 1,6 ລ້ານຕອນ ຕ້ອງໄດ້ສຳເລັດໃນຂອບເຂດທົ່ວປະເທດ ຄັນຊັ້ນໃນຕົວເລກດັ່ງກ່າວຈຶ່ງໄດ້ມາຫານໃຫ້ແຕ່ລະປີເພື່ອສາມາດຈັດຕັ້ງປະຕິບັດ. ພວກເຮົາມາຄົ້ນຄວ້າເບິ່ງທ່າແຮງຈະຈັດຕັ້ງປະຕິບັດມັນມີຄວາມສ່ຽງ ແລະ ທ້າທ້າຍສຳລັບພວກເຮົາໃນການຈັດຕັ້ງປະຕິບັດເພື່ອຈະບັນລຸໂຕເລກດັ່ງກ່າວ, ແຕ່ວ່າພວກເຮົາຢາກໃຫ້ສຳເລັດກະເລີຍຢືນຢັນວ່າເອົາຕົວເລກທີ່ສູງນີ້ໄວ້ ກະຊິສຸມໃສ່ໃນການຈັດຕັ້ງປະຕິບັດ. ໃນນີ້, ອັນທີ 1: ພວກເຮົາໄດ້ສະເໜີທາງກະຊວງການເງິນໃນການຈັດສັນງົບປະມານເພີ່ມເຕີມໃຫ້ແກ່ຂະແໜງທີ່ດິນ 20 ຕື້ເພີ່ມໃນການອອກໃບຕາດິນ, ຜ່ານມາພວກເຮົາບໍ່ທັນໄດ້ລົງທຶນໂດຍກົງໃນວຽກງານດັ່ງກ່າວ ໝາຍຄວາມວ່າພວກເຮົາຍັງເອົາມັນຍຳມັນຢູ່ໄປສຳຫລວດ, ໄປວັດແທກໄດ້ເງິນມາລະໄປອອກໃບຕາດິນຕໍ່ ອັນນີ້ແມ່ນງົບປະມານເບື້ອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ໄດ້ຮັບຈາກການແບ່ງໃນແຕ່ລະປີກໍບໍ່ຫລາຍ 1,5 ຕື້ ແມ່ນພວກເຮົາຫານທັງໝົດ 18 ແຂວງ ກະໄດ້ຈຳນວນໜ້ອຍຫລາຍ. ຜ່ານມາການປະຕິບັດກໍແມ່ນໄດ້ມີການສະໜັບສະໜູນຂອງທ້ອງຖິ່ນ ທັງທ່ານເຈົ້າແຂວງກໍໄດ້ມີການໃຫ້ຢືມກ່ອນ ລວມທັງການປະກອບງົບປະມານໃນການຈັດຊື້ອຸປະກອນກໍຄືການຢືມ ແລະ ການອອກໃບຕາດິນຫັ້ນກ່ອນ, ອັນນີ້ກໍເຮັດໃຫ້ວຽກງານພວກເຮົາສາມາດຈັດຕັ້ງປະຕິບັດໄດ້ໃນຕົວເລກໃນຜ່ານມາຫັ້ນ. ສະນັ້ນ, ໃນປີ 2023 ຖ້າພວກເຮົາມີງົບປະມານພຽງພໍ ປັດຈຸບັນພວກເຮົາມີໜ່ວຍງານອອກໃບຕາດິນທີ່ພວກເຮົາໄດ້ມີການເຝິກອົບຮົມ, ມີອຸປະກອນທີ່ໄດ້ຈັດຊື້ຈາກໂຄງການທີ່ພວກເຮົາໄດ້ກູ້ຢືມແລ້ວຫັ້ນ ຄາດໝາຍວ່າພວກເຮົາຈະສູ້ຊົນໃຫ້ໄດ້ຕາມຄາດໝາຍ. ອັນນີ້ກໍແມ່ນຮຽກຮ້ອງໃຫ້ມີການປະກອບສ່ວນທາງເບື້ອງພັກ-ລັດ, ຂະແໜງການ, ພາກທຸລະກິດມີສ່ວນຮ່ວມໃນການອອກໃບຕາດິນໃນການສຳຫລວດ, ໃນການຈັດສັນ ແລະ ປະຊາຊົນປະກອບສ່ວນໃນການອອກໃບຕາດິນນີ້ຕື່ມມັນຈຶ່ງຈະສຳເລັດ. ຮຽກຮ້ອງໃຫ້ບັນດາທ່ານຜູ້ແທນນີ້ໄດ້ປະກອບສ່ວນໃນວຽກງານດັ່ງກ່າວຕື່ມເພື່ອໃຫ້ພວກເຮົາບັນລຸຄາດໝາຍດັ່ງກ່າວນີ້ ທັງເປັນການໂຄສະນາ, ທັງເປັນການຊຸກຍູ້ຢູ່ໃນທ້ອງຖິ່ນກໍຄືຢູ່ໃນແຂວງທີ່ຜູ້ແທນໄດ້ສະໝັກຢູ່ຫັ້ນລະ ຊຸກຍູ້ວຽກງານດັ່ງກ່າວໃຫ້ພວກເຮົາບັນລຸຕື່ມຮ່ວມກັບງົບປະມານທີ່ພວກເຮົາໄດ້ຮັບການຊ່ວຍເຫລືອຈາກສາກົນ ອັນນັ້ນແມ່ນວຽກງານອອກໃບຕາດິນ.

ສຳລັບວຽກງານຈັດສັນທີ່ດິນມື້ກີ້ກໍໄດ້ເວົ້າໄປແລ້ວໃນຄຳເຫັນຜູ້ແທນວ່າ ແຂວງປັດຈຸບັນແຜນການຈັດສັນທີ່ດິນຂັ້ນແຂວງ ແຜນຈັດສັນທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມຮອບດ້ານຊື່ເຕັມຂອງມັນ. ຂັ້ນແຂວງນີ້ພວກເຮົາເກືອບວ່າສຳເລັດໃນທົ່ວປະເທດ 18 ແຂວງ, ແຕ່ວ່າຍັງ 1 ແຂວງ ຍັງຖ້າສະພາປະຊາຊົນຮັບຮອງ ຄືສິແມ່ນແຂວງວຽງຈັນ ແລະ ແຜນດັ່ງກ່າວນີ້ການຈັດຕັ້ງປະຕິບັດຕົວຈິງແມ່ນພວກເຮົາຍັງການອະນຸມັດໂຄງການຄືຜູ້ແທນເວົ້າມາກະເອກະພາບນຳວ່າຍັງບໍ່ທັນໄປຕາມແຜນທັງໝົດ, ຄະຊັ້ນລະພວກເຮົາເບື້ອງລັດຖະບານ ກໍສຸມໃສ່ເຮັດແນວໃດໃນການຊຸກຍູ້ໃນການຈັດຕັ້ງປະຕິບັດຕົວຈິງທັງສູນກາງ ແລະ ທ້ອງຖິ່ນ ໃຫ້ປະຕິບັດຕາມແຜນທັນ ແລະ ໄປພ້ອມກັນທັນອັນໃດທີ່ມັນບໍ່ສອດຄ່ອງເພາະວ່າການກຳນົດແຜນມີການກຳນົດໄປແຕ່ລະໄລຍະ, ພວກເຮົາຈະມີການປັບປຸງຄືນໃຫ້ມັນສອດຄ່ອງກັບສະພາບຕົວຈິງໃນການຈັດຕັ້ງປະຕິບັດຫັ້ນ. ອັນນັ້ນແມ່ນຕອບຄຳເຈາະຈີ້ມຈຳນວນໜຶ່ງຂອງຜູ້ແທນແຕ່ມື້ວານນີ້ຮອດມື້ນີ້ ຜ່ານມາກໍບໍ່ຮູ້ວ່າສາມາດຕອບໄດ້ໝົດບໍ່ ແຕ່ວ່າລາຍລະອຽດບັນດາຄຳຖາມຕ່າງໆພວກເຮົາກໍໄດ້ບັນທຶກຈະຕອບເປັນລາຍລັກອັກສອນຕື່ມໃຫ້ແກ່ຜູ້ແທນ.

## ມີຂໍ້ຕົກລົງ...

ເລີຍ ບັນຫາທີຂ້າພະເຈົ້າຢາກຂໍມີຂໍ້ສົງໃສກ່ຽວກັບແຜນໃນປີ 2022 ຄືແຜນຈັດເກັບລາຍຮັບ ເຊິ່ງວ່າໄດ້ກຳນົດໃນຂໍ້ທີ 3 ໜ້າທີ 4 ຂ້າພະເຈົ້າຍັງມີຂໍ້ສົງໃສບ່ອນວ່າ ການທີ່ພວກເຮົາສັງລວມຢູ່ໃນນີ້ວ່າ ຜ່ານການສູ້ຊົນ 11 ເດືອນ ແລະ ແຜນໝົດປີຈະໄດ້ 28 ພັນຕື້ທັນ ຂ້າພະເຈົ້າຍັງສົງໄສລາຍການທີ 3 ຕົວເລກທີ່ພວກເຮົາຈະຮັບຮອງ ຫລື ບໍ່ຮັບຮອງ ຫລື ວ່າໂຕເລກຢູ່ໃນນີ້ພວກເຮົາຈະເບິ່ງຢູ່ວ່າກ່ຽວກັບບັນຫາລາຍການທີ 3 ມີຢູ່ປະມານ 5-6 ລາຍການກ່ຽວກັບການມອບເງິນຄໍ້າປະກັນລ່ວງໜ້າຂອງບັນດາບໍລິສັດຂຸດແຮ່ທາດຕ່າງໆນີ້ເປັນລາຍຮັບບໍ ໄປເປັນລາຍຮັບປີ 2022 ບໍ່ ຫລືບໍ່ແມ່ນ, ຖ້າອີງໃສ່ກົດໝາຍ ມາດຕາ 6 ຂອງກົດໝາຍວ່າດ້ວຍງົບປະມານຫັ້ນ ຂ້າພະເຈົ້າຄິດວ່າຖ້າເຮົາມາຕີຄວາມໝາຍຢູ່ ມາດຕາ 6 ຫັ້ນມັນບໍ່ແມ່ນລາຍຮັບເທື່ອ ເພາະວ່າມັນເປັນຄໍ້າປະກັນລ່ວງໜ້າ ຄັນຖ້າວ່າຫາກວ່າກິດຈະການເຫລົ່ານີ້ຫາກບໍ່ໄດ້ເຂົາເຈົ້າຂຸດບໍ່ໄດ້ ຄົ້ນບໍ່ເຫັນທາດແຮ່ເງິນຄໍ້າປະກັນລ່ວງໜ້າຈະໄດ້ສົ່ງຄືນບໍ? ຄັນວ່າສົ່ງຄືນເຮົາມາຈົດໃສ່ລາຍຮັບນີ້ຂໍ້ສະຫລຸບສຸດທ້າຍຜ່ານການຈັດຕັ້ງປະຕິບັດ ມັນຈະບໍ່ສອດຄ່ອງກັບຕົວເລກທີ່ໃສ່ໃນນີ້, ສັງເກດຢູ່ໃນເງິນໂດລາປະມານ 33 ລ້ານໂດລາ, ເງິນກີບ 177 ຕື້ກວ່າ ເກືອບ 178 ຕື້ ຄັນຖ້າມາຈຳກັດຄວາມວ່າ ຄັນຖ້າວ່າມັນບໍ່ແມ່ນລາຍຮັບຄືງທີ່ ຫລື ລາຍຮັບປີ 2022 ຕົວເລກນີ້ໜ້າຈະບໍ່ແມ່ນຈະບໍ່ໄດ້ຄາດໝາຍ, ຂ້າພະເຈົ້າຢາກຕັ້ງຂໍ້ສັງເກດຢູ່ນີ້ ຄັນຖ້າວ່າແມ່ນກໍຂໍຄຳອະທິບາຍວ່າແນວໃດ? ຄັນວ່າມັນມີບັນຫາຈັ່ງຊີ້ນີ້ ມັນຊິເກີດໂດມີໂນຄືທັງ ດຣ. ວາລີ ໄດ້ສະເໜີຫັ້ນ ມັນຊິຕໍ່ເນື່ອງໄປຮອດປີ 2023, ຄັນກໍລະນີບໍ່ແມ່ນລາຍຮັບ ເຮົາໄປເປັນພາກລາຍຈ່າຍແລ້ວເຮົາຊິເປັນໜີ້ ສຸດທ້າຍມາການດຸນດ່ຽງງົບປະມານປີ 2023 ຈະເກີດບັນຫາຕື່ມ ຂ້າພະເຈົ້າຢາກສະເໜີແນວນັ້ນຢາກຂໍແລກປ່ຽນ ຂໍຄຳອະທິບາຍຈາກກະຊວງການເງິນຕໍ່ລາຍຈ່າຍ. ລາຍຈ່າຍນີ້ຂ້າພະເຈົ້າຂໍສືບຕໍ່ຄຳເຫັນຕາງໜ້າຄະນະປະຈຳສະພາແຫ່ງຊາດສະເໜີຫັ້ນເງິນ 700 ຕື້ ຮ່ວງກອງທຶນທາງ ດຽວນີ້ເດືອນ 12 ປີ 2022 ແລ້ວຍັງບໍ່ທັນໄດ້ຈ່າຍມັນຄາອັນໃດ, ຄາບັນຊີໂຄງການບໍ ຫລື ຄາຫຍັງ ຄັນຕາມກົດໝາຍແລ້ວຕາມນັ້ນແລ້ວ ມະຕິຂອງກອງປະຊຸມສະພາແຫ່ງຊາດ ໄດ້ຮັບຮອງແລ້ວກໍຕ້ອງຈ່າຍ ອັນນີ້ຢາກໃຫ້ຄົ້ນຄວ້າເພາະວ່າເດືອນ 12 ແລ້ວ ເພາະວ່າມັນຊິໝົດແລ້ວເດ ການປິດບັນຊີງົບປະມານປີນີ້ມັນຊິປິດແນວໃດໄດ້ ຫລື ຈະໄປປິດໃນປີໃດເງິນງົບປະມານກອງທຶນທາງ ຂ້າພະເຈົ້າຢາກມີຄຳເຫັນຄືແນວນັ້ນຕໍ່ບັນຫາ 2022.

ປີ 2023 ຂ້າພະເຈົ້າຢາກສະເໜີວ່າຕົວເລກໂຕຜາທີ່ໄດ້ສະເໜີມາກໍເຫັນດີເປັນເອກະພາບນຳ ແຕ່ສິ່ງທີ່ຂ້າພະເຈົ້າຢາກຕັ້ງຂໍ້ສັງເກດຢູ່ວ່າສຳຄັນທີ່ສຸດກ່ຽວກັບການພະຍາກອນ ກ່ຽວກັບບັນຫາເລື່ອງອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນສຳຄັນຫລາຍ ເພາະວ່າໂດຍສະເພາະເລື່ອງພະຍາກອນອັດຕາແລກປ່ຽນມີອິດທິພົນຫລາຍຕໍ່ເສດຖະກິດມະຫາພາກເປັນຕົ້ນຄວາມອາດສາມາດໃນການໃຊ້ໜີ້, ການຊຳລະໜີ້ຕ່າງປະເທດ ແມ່ນຢູ່ເງິນກີບເຮົາອາດຈະໄດ້ອັດຕາແລກປ່ຽນເຮົາຄຸມບໍ່ໄດ້ ມັນສິມີບັນຫາໄດ, ເຂົ້າໃຈວ່າຄວາມເປັນຫ່ວງເປັນໃຍຂອງລັດຖະບານກ່ຽວກັບຄວາມອ່ອນໄຫວ ຄັນຖ້າປະກາດ, ແຕ່ວ່າພວກເຮົາເວົ້າໄດ້ໜຶ່ງກໍເປັນການປົກປ້ອງ, ເຕືອນສະຕິຂອງສັງຄົມເຮົາໃນການດຳເນີນກິດຈະການຕ່າງໆເຖິງແມ່ນວ່າພວກເຮົາຈະເອົາໄປຕີໃສ່ເງິນ M2 ກໍດີໃນປີ 2023 ທີ່ມັນໃກ້ຄຽງກັນທີ່ມັນສາມາດເພິ່ງພາກັນໄດ້ແຕ່ຢ່າລືມວ່າເງິນ M2 ຕາມສະຫລຸບໃນເດືອນ 11 ປີນີ້ M2 ເຮົານີ້ 39 ເກືອບ40% ແຕ່ວ່າປີ 2023 ພວກເຮົາກຳນົດແຕ່ 26% ຢູ່ບໍລະ ຂ້າພະເຈົ້າຄິດວ່າຊິຍາກ. ດັ່ງນັ້ນ, ຄິດວ່າເຮັດແນວໃດກໍແລ້ວແຕ່ ຂ້າພະເຈົ້າຢາກໃຫ້ຕັ້ງບັນຫານີ້ເປັນປະເດັນທີ່ສຳຄັນຫລາຍທີ່ສຸດ.

ລະຕໍ່ມານີ້ກ່ຽວກັບເລື່ອງ 2023 ຢາກໃຫ້ສະເໜີວ່າ ຈັດຮ່ວງງົບປະມານລາຍຈ່າຍບໍລິຫານປົກກະຕິໃຫ້ແກ່ດ່ານສາກົນ ເພາະວ່າໄປຫລາຍດ່ານບໍ່ມີເງິນ, ຄ່ານໍ້າປະປາກະບໍ່ມີ, ຄ່າໄຟຟ້າກະບໍ່ມີ, ທີ່ພັກອາໄສສ້ອມແປງບໍ່ເວົ້າເຖິງ ຂໍໃຫ້ຈັດແທ້ ຈັດຢູ່ບໍລິຫານພາກປົກກະຕິກໍໄດ້ ຂໍໃຫ້ສະເໜີຈັ່ງຊັ້ນ ນັ້ນແມ່ນບັນຫາໜຶ່ງຂ້າພະເຈົ້າຢາກມີຄຳເຫັນ.

ບັນຫາທີສອງ ກ່ຽວກັບການຟື້ນຟູສ້ອມແປງເສັ້ນທາງ. ຄິດວ່າພວກເຮົາຜູ້ແທນຫລາຍຄົນ ອັນນີ້ແມ່ນຄວາມເດືອດຮ້ອນຂອງປະຊາຊົນຈະແມ່ນກໍລະນີໃດກໍຢ່າ ທາງນີ້ຈະເປັນທາງເຫດສະບານ, ທາງຊົນນະບົດກໍແລ້ວແຕ່ພວກເຮົາຂາດການສ້ອມແປງ ຕົວຢ່າງວ່າຄັນວ່າຢູ່ໃນເມືອງເປັນຫຍັງພວກເຮົາບໍ່ພາກັນຟື້ນຟູກອງສ້ອມແປງຂອງແຂວງຂຶ້ນມາ ຄືກອງສ້ອມແປງຂອງນະຄອນຫລວງກໍມີປະສິດທິພາບ ຜ່ານມາເຜ່ເລັກເຜ່ໜ້ອຍເຮົາກໍສ້ອມແປງໄດ້, ແຕ່ເຮົາຕ້ອງໄປທະລາຍເລື່ອງກຳແພງທີ່ພວກເຮົາສະກັດກັ້ນກັນໄວ້ນີ້ບັນດາບໍລິສັດລັດຂອງພວກເຮົາ ໂດຍທີ່ວ່າຖ້າບໍ່ໄດ້ປະມູນ, ຈັດຊື້ ຖືກຕ້ອງຕາມລະບຽບ, ກົດໝາຍ ຕົວນັ້ນລະເປັນກຳແພງໃຫ້ເຂົາເຈົ້າບໍ່ສາມາດດຳເນີນການໄດ້, ເຮົາຄືບໍ່ປົກປ້ອງອັນນີ້ ສ້າງລະບຽບຂຶ້ນມາເພື່ອຄຸ້ມຄອງໃຫ້ເຂົາເຈົ້າສາມາດດຳເນີນໄດ້ ເງິນກອງທຶນທາງຂອງພວກເຮົາກໍມີ, ແຕ່ວ່າສຳຄັນການຈັດຕັ້ງປະຕິບັດໂຕນີ້ຄວນເບິ່ງບັນຫາມັນ ຂ້າພະເຈົ້າຢາກສະເໜີວ່າຄວນຟື້ນຟູກອງສ້ອມແປງທາງຂອງແຂວງ ບັນພະບຸລຸດຂອງເຮົາກໍເຮັດມາລະເດ່ແຕ່ເຮົາຊິໄປຍຸບເປ່ເພ່ມັນ ຄິດວ່າຟື້ນຄືນກໍຍັງໄດ້ ບ່ອນທີ່ມີເງື່ອນໄຂຟື້ນຄືນໄດ້ ກອງສ້ອມແປງນະຄອນຫລວງກໍຍັງ ຂ້າພະເຈົ້າຄິດວ່າແນວນັ້ນ.

ບັນຫາທີສາມ ຂ້າເຈົ້າຢາກເວົ້າເສີມກ່ຽວກັບການອອກໃບຕາດິນ. ອອກໃບຕາດິນນີ້ແລ້ວຄືກັນ ສສຊ ແຂວງສະຫວັນນະເຂດ ໄດ້ສະເໜີນັ້ນ ຂ້າພະເຈົ້າຢາກເພີ່ມເຕີມວ່າດິນສາມປະເພດປ່າທັນ ເປັນຫຍັງເຮົາຈຶ່ງບໍ່ອອກໃຫ້ເຂົາເຈົ້າໄດ້, ບັນດາບໍລິສັດສຳປະທານຕ່າງໆທີ່ລົງທຶນພວກເຮົາກໍທັນປ່ຽນປ່າໃຫ້ເຂົາເຈົ້າໄດ້, ແຕ່ປະຊາຊົນເຮົາຜູ້ຢູ່ອາໄສມາແຕ່ດຶກດຳບັນແຕ່ປູ່ສັງກະສາຍ່າສັງກະສີເຮົາກໍຄວນມີວິທີການອອກເຖິງວ່າຂັ້ນແກ້ກົດໝາຍເຮົາກະຕ້ອງແກ້ ຫລື ສະພາແຫ່ງຊາດເຮົາກໍມີໜ້າທີ່ຮັບຜິດຊອບໃນການແກ້ໄຂບັນຫາດັ່ງກ່າວນີ້ ຂ້າພະເຈົ້າຄິດວ່າຢາກໃຫ້ມີການແກ້ໄຂບັນຫານີ້.

# ກົດໝາຍວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດ ຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຄົ້ນຄວ້າທາງດ້ານວິທະຍາສາດ, ການສຶກສາ, ການສ້າງ, ບຳລຸງຊັບພະຍາກອນມະນຸດ ເພື່ອພັດທະນາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໃຫ້ມີຄວາມກ້າວໜ້າ ແລະ ທັນສະໄໝ ບົນພື້ນຖານຫຼັກການເຄົາລົບ ເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງກິດຈະການພາຍໃນ ຊຶ່ງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ປະຕິບັດສົນທິສັນຍາ ທີ່ ສປປລາວ ເປັນພາຄີ.

**ພາກທີ II**
**ການຄຸ້ມຄອງອາວຸດ**
**ໝວດທີ 1**
**ປະເພດອາວຸດ**

**ມາດຕາ 8 ປະເພດອາວຸດ**

ປະເພດອາວຸດ ມີ ດັ່ງນີ້:

1. ອາວຸດເສິກ;
2. ອາວຸດກິລາ;
3. ອາວຸດພື້ນເມືອງ.

**ມາດຕາ 9 ອາວຸດເສິກ**

ອາວຸດເສິກ ແມ່ນ ປືນ, ລູກກະສູນ, ລູກລະເບີດ, ພາຫະນະ ຫຼື ລະບົບພາຫະນະ ແລະ ອາວຸດເສິກ ທຸກຊະນິດ ເປັນຕົ້ນ ປືນສັ້ນ, ປືນເຫຼັກຍາວ, ປືນກົນ, ປືນຄົກ, ປືນໃຫຍ່, ລູກສອນໄຟ, ຮາດາ, ລົດສູ້ຮົບ, ເຮືອບິນສູ້ຮົບ, ເຮືອບິນບໍ່ມີຄົນຂັບ ແລະ ເຮືອສູ້ຮົບ.

**ມາດຕາ 10 ອາວຸດກິລາ**

ອາວຸດກິລາ ແມ່ນ ປືນອັດລົມ, ປືນແວ່ງ ສັ້ນ-ຍາວ, ປືນສັ້ນ, ປືນເຫຼັກຍາວ, ປືນລູກຊອງ ແລະ ລູກກະສູນ ທີ່ມີ ຂະໜາດ, ຄວາມແຮງ ແລະ ດາບ, ທະນູ, ໜ້າເກັກ, ຫຼາວ ແລະ ອາວຸດກິລາອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

ອ່ານຕໍ່ສະບັບໜ້າ...

ຖະແຫລງ..

ຈຳສະພາແຫ່ງຊາດ, ທັງເປັນຫົວໜ້າກອງເລຂານຸການຂອງກອງປະຊຸມ ມີຄວາມຍິນດີ ແລະ ຖືເປັນກຽດແຈ້ງມາຍັງບັນດາທ່ານ ພະນັກງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດຮັບຊາບກ່ຽວກັບຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:

I. ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ເລີ່ມໄຂຂຶ້ນໃນຕອນເຊົ້າຂອງວັນຈັນ ວັນທີ 5 ທັນວາ 2022 ແລະ ໄດ້ດຳເນີນມາເຖິງຕອນບ່າຍຂອງວັນສຸກ ວັນທີ 30 ທັນວາ 2022 ເຊິ່ງໄດ້ໃຊ້ເວລາດຳເນີນກອງປະຊຸມທັງໝົດ 20 ວັນ. ໃນກອງປະຊຸມຄັ້ງນີ້ ນອກຈາກການເຂົ້າຮ່ວມຂອງສະມາຊິກສະພາແຫ່ງຊາດແລ້ວຍັງມີການນຳຂັ້ນສູງຂອງພັກ-ລັດ, ຄະນະລັດຖະບານ, ອົງການຈັດຕັ້ງພັກ-ລັດ ແລະ ແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

II. ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍໄດ້ອອກເປັນມະຕິກອງປະຊຸມ ຈຳນວນ 21 ສະບັບ ດັ່ງນີ້:

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດ ປີ 2023;

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

3) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021;

4) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງນາຍົກລັດຖະມົນຕີ ແຫ່ງ ສປປລາວ ຜູ້ໃໝ່;

5) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ; ຜົນການກວດກາຕາມຜົນການກວດສອບ ປີ 2020;

6) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

7) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການປະຈຳປີ 2023;

8) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

9) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025;

10) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍ ຈຳນວນ 12 ສະບັບ (ຈຳນວນ 12 ມະຕິ).

ຮ່າງກົດໝາຍສ້າງໃໝ່ 3 ສະບັບ ຄື:

(1) ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ;

(2) ຮ່າງກົດໝາຍວ່າດ້ວຍການທາງນ້ຳ;

(3) ຮ່າງກົດໝາຍວ່າດ້ວຍຫໍພິພິທະພັນ.

ກົດໝາຍປັບປຸງ 9 ສະບັບ ຄື:

(1) ກົດໝາຍວ່າດ້ວຍ ທະນາຍຄວາມ;

(2) ກົດໝາຍວ່າດ້ວຍ ທະບຽນສານ;

(3) ກົດໝາຍວ່າດ້ວຍ ການກັນ ແລະ ຄວບຄຸມພະຍາດຕິດຕໍ່;

(4) ກົດໝາຍວ່າດ້ວຍ ວິສາຫະກິດ;

(5) ກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ;

(6) ກົດໝາຍວ່າດ້ວຍ ອົງການໄອຍະການທະຫານ;

(7) ກົດໝາຍວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ;

(8) ກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ;

(9) ກົດໝາຍວ່າດ້ວຍ ການກວດກາລັດ.

ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ນີ້ ສະພາແຫ່ງຊາດໄດ້ສະເໜີໃຫ້ 19 ພາກສ່ວນ ຂຶ້ນຊີ້ແຈງຕໍ່ຄຳຊັກຖາມກ່ຽວກັບບັນຫາທີ່ພົ້ນເດັ່ນຂອງສັງຄົມ ເຊິ່ງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດໄດ້ຍົກຂຶ້ນຢູ່ໃນກອງປະຊຸມປະກອບມີທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປລາວ, ກະຊວງອຸດສາຫະກຳ-ການຄ້າ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງກະສິກຳ-ປ່າໄມ້, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງຍຸຕິທຳ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງການຕ່າງປະເທດ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນປະເທດ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ.

III. ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນດັ່ງກ່າວມາຂ້າງເທິງນັ້ນ, ໃນໄລຍະດຳເນີນກອງສະໄໝສາມັນເທື່ອທີ 4 ຂອງ ສະພາແຫ່ງຊາດ ຊຸດທີ IX ມີປະຊາຊົນບັນດາເຜົ່າສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ (156) ຫລາຍກວ່າ 610 ສາຍ 331 ເລື່ອງ ເຊິ່ງພົວພັນເຖິງການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງບໍລິຫານລັດ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຕໍ່ກັບຄຳຄິດເຫັນຂອງປະຊາຊົນທີ່ສົ່ງມາທາງໂທລະສັບສາຍດ່ວນດັ່ງກ່າວ ກອງເລຂານຸການກອງປະຊຸມໄດ້ສັງລວມແລະມອບໃຫ້ກຳມາທິການທີ່ກ່ຽວຂ້ອງເພື່ອປະສານສົມທົບກັບບັນດາພາກສ່ວນກ່ຽວຂ້ອງ ຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

ອີກເທື່ອໜຶ່ງ ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ຂ້າພະເຈົ້າຂໍຂອບໃຈມາຍັງບັນດາທ່ານພະນັກງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າທຸກຊົນຊັ້ນຄົນໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ທີ່ໄດ້ຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂໍຂອບໃຈທຸກພາກສ່ວນ ທີ່ສະໜັບສະໜູນທາງດ້ານວັດຖຸປັດໄຈຊຸກຍູ້ກອງປະຊຸມຄັ້ງນີ້.

ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈ ມາຍັງພາກສ່ວນສື່ມວນຊົນທຸກສຳນັກຂ່າວລວມທັງໂທລະພາບແຫ່ງຊາດ, ວິທະຍຸກະຈາຍສຽງແຫ່ງຊາດ ແລະ ສື່ສິ່ງພິມປະເພດຕ່າງໆ ທີ່ໄດ້ຕິດຕາມຢ່າງໃກ້ຊິດເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ.

# ການຈັດຕັ້ງປະຕິບັດວາລະແຫ່ງຊາດ



ຄຳເຫັນຂອງທ່ານ ສົມພອນ ສີອຸດົມພັນ ສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ 6 ແຂວງຫລວງພະບາງ ປະກອບຄຳເຫັນ.

ຂໍມີຄຳຄິດຄຳເຫັນແລກປ່ຽນຕໍ່ກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ແລະ ການແກ້ໄຂບັນຫາຢາເສບຕິດມີ 2-3 ບັນຫາຄືດັ່ງນີ້:

ໃນດ້ານພື້ນຖານຂ້າພະເຈົ້າກໍເຫັນດີເປັນເອກະພາບຕໍ່ກັບບົດລາຍງານຂອງລັດຖະບານ ກ່ຽວກັບວຽກນີ້ ແລະ ມີຄວາມເປັນເອກະພາບສູງຕໍ່ກັບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ການຈັດຕັ້ງປະຕິບັດວາລະແຫ່ງຊາດດັ່ງກ່າວ ໃນທີ່ນີ້ຂ້າພະເຈົ້າກໍຢາກມີຄຳເຫັນແລກປ່ຽນບາງຈຸດຄືແນວນີ້:

1. ຂ້າພະເຈົ້າມີຄວາມເຫັນດີຢູ່ບ່ອນວ່າ ລັດຖະບານກໍໄດ້ສະຫລຸບຄະນະປະຈຳກໍໄດ້ມີຄຳເຫັນ ວ່າອັນທີ່ເປັນບັນຫາຄ້າງຄາຕົ້ນຕໍອັນໜຶ່ງຂອງການຈັດຕັ້ງປະຕິບັດວາລະແຫ່ງວ່າດ້ວຍການແກ້ໄຂບັນຫາຢາເສບຕິດແມ່ນບັນຫາການສ້າງຄວາມຮັບຮູ້ຄວາມເຂົ້າໃຈໃຫ້ແກ່ແຕ່ລະພາກສ່ວນການສ້າງສະຕິຕື່ນຕົວເຂົ້າຮ່ວມຂອງທຸກພາກສ່ວນໃນສັງຄົມ ກໍຄືຂອງປະຊາຊົນບັນດາເຜົ່າ ພວກເຮົານີ້ເຮັດມັນບໍ່ທັນໄດ້ເລິກເຊິ່ງ ຈາກນັ້ນ ຈຶ່ງພາໃຫ້ມີການຈັດຕັ້ງຢູ່ຂັ້ນຮາກຖານນີ້ຈຳນວນບໍ່ໜ້ອຍປະຊາຊົນກໍບໍ່ໜ້ອຍ ຍັງຢາກໂຍນຄວາມຮັບຜິດຊອບໃນການແກ້ໄຂບັນຫາຢາເສບຕິດໃຫ້ແກ່ເຈົ້າໜ້າທີ່ຕຳຫລວດ, ໃຫ້ແກ່ອົງການປົກຄອງທ້ອງຖິ່ນ ໂດຍສະເພາະຂັ້ນເມືອງ, ຂັ້ນແຂວງ ພວກຂ້າພະເຈົ້າລົງໄປຕິດຕາມກວດກາ ກໍໄດ້ຮັບຄຳສະເໜີຫລາຍຈາກປະຊາຊົນວ່າ ບ່ອນໃດກໍຢາກໃຫ້ເຈົ້າໜ້າທີ່ຕຳຫລວດ ບ່ອນໃດກໍຢາກໃຫ້ອົງການປົກຄອງທ້ອງຖິ່ນຂັ້ນເມືອງ, ຂັ້ນແຂວງລົງໄປເປັນຜູ້ແກ້ ສ່ວນເຂົາເຈົ້ານັ້ນຍັງຄິດຈິ່ງຈຽມກັນ, ຢ້ານກັນ ສະນັ້ນ ຂ້າພະເຈົ້າຢາກສະເໜີໃຫ້ທາງລັດຖະບານເອົາໃຈໃສ່ຕໍ່ກັບບັນຫານີ້ຕື່ມອີກ ໂດຍທຸ້ມງົບປະມານໃສ່ລົງໂຄສະນາເຜີຍແຜ່ຜົນຮ້າຍແຮງຂອງຢາເສບຕິດ ເນື້ອໃນຂອງວາລະແຫ່ງຊາດ ໃຫ້ມັນກວ້າງຂວາງເລິກເຊິ່ງກວ່າເກົ່າ.

2. ກ່ຽວກັບການບຳບັດຜູ້ຕິດຢາເສບຕິດ ພວກເຮົາກໍໄດ້ຄິດຄົ້ນຫລາຍວິທີ ໃນການບຳບັດຜູ້ຕິດຢາເສບຕິດນີ້ ນັບທັງສ້າງສູນບຳບັດຢູ່ຂັ້ນພາກ, ຂັ້ນແຂວງ ລະກໍມີບາງເຂດບາງເມືອງ ກໍໄດ້ພາກັນສ້າງຂຶ້ນ ແຂວງພວກຂ້າພະເຈົ້າ ກໍໄດ້ເອກະພາບກັນວ່າ ບ້ານນີ້ກໍຄວນເຮັດສະຖານທີ່ສຳລັບບຳບັດ ເພາະວ່າພວກເຮົາຕ້ອງເຂົ້າໃຈວ່າຜູ້ຕິດຢາເສບຕິດນີ້ໄປຂັງລ້າໆແລ້ວຈະໃຫ້ມັນດີນີ້ເປັນໄປໄດ້ຍາກ ສະນັ້ນ, ການຈະໃຫ້ຜູ້ທີ່ຕິດຢາເສບຕິດ ອອກຈາກຢາເສບຕິດແທ້ໆນີ້ມັນຕ້ອງມີການບຳບັດປິ່ນປົວຖືກຕາມຫລັກວິຊາການຄັກແນ່ ຄັນຢາກໄດ້ແນວນັ້ນມັນກໍຕ້ອງມີງົບປະມານທີ່ສົມເຫດສົມຜົນ ຂ້າພະເຈົ້າຢາກສະເໜີວ່າ ທຶນທີ່ພວກເຮົາຈະໄດ້ນີ້ແມ່ນຢາກໃຫ້ສຸມໃສ່ເບິ່ງບັນຫານີ້ຕື່ມ ຜ່ານການລົງຕິດຕາມກວດການັ້ນ ພວກຂ້າພະເຈົ້າເຫັນວ່າຢູ່ຄ້າຍຄຸ້ມຂັງນີ້ກໍຍັງຄ້າງຄາຫລາຍອັນ ຄ້າຍຊຸ່ມຂັງຫລວງພະບາງນີ້ກໍຍັງຕິດໜີ້ຕິດສິນເລື່ອງໄຟຟ້າກໍຍັງມີ ຢາປົວພະຍາດກໍບໍ່ມີ ເຮັດແນວໃດພວກເຮົາຈະສາມາດບຳບັດໄດ້, ຂ້າພະເຈົ້າຄິດວ່າໃຫ້ສິ່ງເສີມໃຫ້ມີການສ້າງຫ້ອງບຳບັດນ້ອຍຢູ່ບ້ານນັ້ນ ເຊິ່ງເອົາທຶນຮອນຂອງປະຊາຊົນຄອບຄົວຜູ້ຕິດຢາເສບຕິດນັ້ນມາຊ່ວຍແຕ່ສຳຄັນອັນໜຶ່ງກໍຕ້ອງມີການຊ່ວຍໜູນຈາກພາກລັດພວກເຮົາ ກໍຄືວິຊາການ ໂດຍສະເພາະກໍແມ່ນວິຊາການແພດ ກໍຄືງົບປະມານ ສຳລັບການຊື້ຢາມາບຳບັດປິ່ນປົວດັ່ງກ່າວນີ້.

3. ຢາກມີຄຳເຫັນກ່ຽວກັບບັນຫາໃຫ້ເອົາໃຈໃສ່ຕໍ່ກັບເຝິກອົບຮົມຫັດແອບກຳລັງພວກເຮົານີ້ ຄືພວກເຮົາຮູ້ແລ້ວວ່າຜູ້ຄ້າຢາເສບຕິດນີ້ມັນມີຄົບໃດພາຫະນະເຂົາເຈົ້າ ມີທັງອາວຸດ, ມີທັງພາຫະນະ, ມີທັງໄຫວພິກ ເພາະເຂົາຈະປອງຫລັກພວກເຮົາເດ່ະ ສະນັ້ນ, ຖ້າພວກເຮົາບໍ່ເອົາໃຈໃສ່ເຝິກອົບຮົມເຈົ້າໜ້າທີ່ພວກເຮົາ ຕໍ່ໄປຈະມີອັນຕະລາຍຫລາຍສຳລັບເຈົ້າໜ້າທີ່ ບົດຮຽນໄລຍະຫລັງໆ ພວກເຮົາກໍມີແລ້ວ ຫລວງພະບາງກໍສູນເສຍກຳລັງເຈົ້າໜ້າທີ່ໄປຢູ່ເມືອງວຽງຄຳນັ້ນ ອັນນີ້ພວກເຮົາຢາກໃຫ້ເອົາໃຈໃສ່ແທ້ໆ.

4. ກ່ຽວກັບທຶນຮອນ ພວກເຮົາກໍຮູ້ວ່າມັນມີຄວາມຕ້ອງການ ສະນັ້ນທຶນພວກເຮົາ ດຽວນີ້ມັນມີທຶນຂອງລັດ, ງົບປະມານຂອງລັດ ມັນມີການຊ່ວຍເຫລືອຈາກສາກົນ, ມັນມີເງິນກອງທຶນ ນອກຈາກນັ້ນບັນດາເມືອງກໍມີທຶນໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແຕ່ວ່າຈະໄປໃສ່ໝົດ ອັນນີ້ກໍເປັນໄປບໍ່ໄດ້ ນອກຈາກນັ້ນກໍແມ່ນຄວາມຕື່ນຕົວປະກອບສ່ວນຂອງປະຊາຊົນ ຜູ້ໃດມີຄວາມຕື່ນຕົວກໍປະກອບສ່ວນ ຂ້າພະເຈົ້າຢາກສະເໜີວ່າຄັນພວກເຮົາເຮັດເປັນວາລະແຫ່ງຊາດໃນຕໍ່ໜ້າ ຢາກຂໍໃຫ້ມັນເປັນພັນທະຂອງທຸກຄົນໃນສັງຄົມ ຈະໄດ້ບໍ່ ໝາຍຄວາມວ່າປີໜຶ່ງນີ້ເຮົາກຳນົດຈະເອົາຈັກພັນ ເພື່ອປະກອບສ່ວນເຂົ້າໃນວຽກ ຖ້າວ່າທຸກຄົນບໍ່ປະກອບສ່ວນນີ້ມັນຈະບໍ່ສຳເລັດ ຂ້າພະເຈົ້າຢາກມີຄຳເຫັນແລກປ່ຽນບາງບັນຫາຄືແນວນັ້ນ.

ກອງປະຊຸມ...

ປີ 2023 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2020; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງສານປະຊາຊົນສູງສຸດ; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການໄອຍະການປະຊາຊົນສູງສຸດ; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງສະພາແຫ່ງຊາດ; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ໃນໄລຍະປີ 2023-2025.

ກອງປະຊຸມ, ຍັງໄດ້ພິຈາລະນາ ແລະ ຮັບຮອງເອົາການສະເໜີຂອງປະທານປະເທດ ກ່ຽວກັບການພິຈາລະນາໃບຄຳຮ້ອງຂໍພັກການ-ຮັບອຸດໜູນບຳນານຂອງທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ ແລະ ເລືອກຕັ້ງນາຍົກລັດຖະມົນຕີ ແຫ່ງ ສປປລາວ ຕາມການສະເໜີຂອງປະທານປະເທດ ເຊິ່ງກອງປະຊຸມໄດ້ເລືອກຕັ້ງເອົາທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ ເປັນນາຍົກລັດຖະມົນຕີ ແຫ່ງ ສປປລາວຄົນໃໝ່ ດ້ວຍຄະແນນສຽງເຫັນດີ 98,67%, ບໍ່ເຫັນດີ 1,32% ແລະ ບໍ່ອອກສຽງ 0%. ພ້ອມນັ້ນ, ຍັງໄດ້ພິຈາລະນາ ແລະ ຮັບຮອງຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ດ້ວຍຄະແນນສຽງເຫັນດີ 98,67%, ບໍ່ເຫັນດີ 1,32% ແລະ ບໍ່ອອກສຽງ 0%.

ວາລະພິທີປິດ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຂຶ້ນກ່າວສູນທອນພົດ ເພື່ອອັດກອງປະຊຸມຢ່າງເປັນທາງການ ເຊິ່ງເນື້ອໃນຂອງສູນທອນພົດໄດ້ຍົກໃຫ້ເຫັນເຖິງຜົນສຳເລັດ, ຄວາມເອົາໃຈໃສ່ ແລະ ການມີສ່ວນຮ່ວມຢ່າງຕັ້ງໜ້າຂອງສະພາແຫ່ງຊາດ, ຄະນະລັດຖະບານ, ອົງການທີ່ກ່ຽວຂ້ອງ ກໍຄືບັນດາ ສສຊ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຈັດກອງປະຊຸມຄັ້ງນີ້ ເຮັດໃຫ້ກອງປະຊຸມປິດລົງໄດ້ດ້ວຍຜົນສຳເລັດອັນຈົບງາມຕາມລະດັບຄາດໝາຍທີ່ວາງໄວ້.

(ນາງ ປາກາລັກ ພົມມີໄຊ)